# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ III ສະບັບທີ 8* ກັນຍາ 1995
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION



## ສັງຮອມ ການ ເຄື່ອນໄຫວ

ບຸນທະວີ ບຸນຈູຮັກ
ຈັນສະມຸດ ທີລະກຸນ

ຈາກແກ່ນທ້າວສູ່ປາກລາຍ. ເມືອງປາກລາຍ ເປັນເມືອງທີ່ກວ້າງຂວາງ ອັນດັບໜຶ່ງຂອງແຂວງ ໄຊຍະບູລີ, ປະຊາຊົນສ່ວນຫລາຍດຳລົງຊີວິດຫ່າງໄກຈາກຕົວເມືອງ. ເສັ້ນທາງຄົມນາຄົມຫຍຸ້ງຍາກທີ່ສຸດ ໂດຍສະເພາະໃນລະດູຝົນ ແຕ່ປະຊາຊົນຜັດຄອງຄອຍຢາກໃຫ້ໂຄງການ ໄປຊ່ອຍອະນຸລັກຮັກສາມໍລະດົກໃບລານ ໜ່ວຍສຳຫລວດ ຈຶ່ງມີກຳລັງໃຈລົງໄປຮອດໄປເຖິງ ໂດຍບໍ່ໄດ້ເອົາຫົວໃສ່ໃຈຊາຕ່າກັບສະພາບການເດີນທາງ ທີ່ຫຍຸ້ງຍາກນັ້ນເສຍ.

* ເຂດເມືອງທົ່ງ ດິນແດນວິລະຊົນ 3 ໝູ່ບ້ານ ເສັ້ນທາງໄກຈາກຕົວເມືອງພຽງແຕ່ 40 ກິໂລແມັດ ແຕ່ຕ້ອງໃຊ້ເວລາຂີ່ລົດເຖິງ 7 ຊົ່ວໂມງ ຈຶ່ງເຖິງຈຸດໝາຍ, ເຂດເມືອງທົ່ງມີຈຳນວນ 15 ບ້ານ ເປັນດິນແດນທີ່ອຸດົມສົມບູນໄປດ້ວຍເຂົ້າ ພິເສດຍັງມີຊ້າງເຖິງ 300 ກວ່າໂຕ, ມີສິລະປະ ປະຈຳທ້ອງຖິ່ນ ເຊັ່ນ : ກອງປິ່ງ, ຂັບທົ່ງ. ຄະນະໜ່ວຍສຳຫລວດໄດ້ເຄື່ອນໄຫວສຳຫລວດຢູ່ເຂດນີ້ 6 ວັດ ພົບໜັງສືໃບລານ 1.111 ຜູກ.

ອອກຈາກເຂດເມືອງທົ່ງ ກັບຄືນມາທີ່ບ້ານນ້ຳບານ, ບ້ານເມືອງວາ, ບ້ານນ້ຳຍາງ ແລະ ເຂດສຸວັນນະພູມ ໄດ້ທຳການສຳຫລວດ 19 ວັດ ມີໜັງສືໃບລານ 5.406 ຜູກ ລວມມີ 297 ມັດ.

ກ່ອນຈະອອກຈາກປາກລາຍ ທ່ານມະຫາ ບຸນຍົກ ແສນສູນທອນ ຍັງໄດ້ໂອ້ລົມບັນຫາການອະນຸລັກວັດທະນະທຳ, ຂອງດີໃນໃບລານສູ່ພະນັກງານອ້ອມຂ້າງເມືອງ, ຄູອາຈານ ແລະ ນັກຮຽນເພື່ອສົ່ງເສີມຄວາມຮູ້ ຄວາມເຂົ້າໃຈເປັນການແລກປ່ຽນບົດຮຽນ ລະຫວ່າງໂຄງການ ແລະ ທ້ອງຖິ່ນ.

* ຄະນະໜ່ວຍສຳຫລວດອອກຈາກປາກລາຍ ພ້ອມໆກັບສາຍຝົນ ທັ່ງເຫລົ່ງບາຢ່າງແຮງທີ່ເຮັດໃຫ້ການເດີນທາງຕ້ອງຟ້າວຟັ່ງຂຶ້ນຕື່ມ ແຕ່ທາງຫ້ອງການ ວັດທະນະທຳເມືອງພຽງຮຽກຮ້ອງຢາກໃຫ້ມີການສຳຫລວດຢູ່ເມືອງນີ້, ໜ່ວຍສຳຫລວດຈຶ່ງໄດ້ດຳເນີນງານດ້ວຍຄວາມຍິນດີ ໂດຍໄດ້ສຳຫລວດແຕ່ພຽງວັດດຽວຄື ວັດຈັນທະລັງສີ ບ້ານໂພນສະອາດ ພົບໜັງສືໃບລານ 262 ຜູກ ລວມມີ 10 ມັດ. ຍ້ອນເຂົ້າສູ່ລະດູຝົນແລ້ວ ຖະໜົນຫົນທາງບໍ່ອຳນວຍໜ່ວຍສຳຫລວດຈຶ່ງເດີນທາງກັບສູ່ເທສະບານເມືອງໄຊຍະ.

→



→

ຮູບພາບຂອງຊາວບ້ານ, ພະສົງ ທີ່ມາຮ່ວມມືກັບຄະນະຂອງພວກເຮົາ ຢ່າງຄຶກຄື້ນຢູ່ແຕ່ລະທ້ອງຖິ່ນນັ້ນ ຍັງ ຝັງແໜ້ນຢູ່ໃນຄວາມຊົງຈຳຂອງຄະ ນະສຳຫລວດ, ສາຍສຳພັນຄວາມຮັກ ແພງລະຫວ່າງພວກເຮົາກັບຊາວບ້ານ ຮັດແໜ້ນດ້ວຍຝ້າຍຂາວບໍລິສຸດ, ພາ ບາສີທີ່ປະດັບເອ້ດ້ວຍດອກໄມ້ຫລາຍ ສີ, ຄຳສູ່ຂວັນທີ່ເປັນສິລິມຸງຄຸນ ຍັງຕິດ ຫູພວກເຮົາບໍ່ລືມ ຂໍໃຫ້ພອນຕ່າງໆ ຈົ່ງກັບຄືນໄປສູ່ປະຊາຊົນຊາວເມືອງ ບໍ່ແຕນ ແກ່ນທ້າວ ປາກລາຍ, ເມືອງ ພຽງ ທຸກໆຄົນ ເຖີ້ນ !

ຈາກທົ່ງສາ ຫາ ເມືອງເງິນ. ເພື່ອກະກຽມໃຫ້ແກ່ການ ສຳຫລວດໃນທ້າຍປີ 1995 ຢູ່ທີ່ 4 ເມືອງເໜືອຂອງ ແຂວງໄຊຍະບູລີ, ນາງ ດາລາ ກັນ ລະຍາ, ທ່ານ ສາສະດາ ດຣ. ຮາຣັນ ຮຸນດິອຸສ ພ້ອມດ້ວຍຄະນະອອກເດີນ ທາງ ໂດຍທາງເຮືອຂຶ້ນໄປ ຕາມນ້ຳ ຂອງສູ່ທົ່ງສາ.

ທົ່ງສາ ເປັນເມືອງທີ່ອ້ອມດ້ວຍ ພູຜາ ມີຊື່ເດີມວ່າ "ທົ່ງສາວະດີ" ຜູ້ເຖົ້າ ຜູ້ແກ່ເລົ່າວ່າ ປູ່ຍ່າຕາຍາຍພາກັນ ອົບພະຍົບມາຈາກທາງເໜືອ ເມື່ອ 100 ກວ່າປີ ບ່ອນນີ້ເຄີຍເປັນສະໄຫຍ່, ມີດອກບົວເຕັມສະ, ມີນົກທົ່ງມາຫລິ້ນ ນ້ຳ ຊຶ່ງອາດຈະເປັນທີ່ມາຂອງຊື່ ຄຳວ່າ "ທົ່ງສາວະດີ"

ປະຊາຊົນສ່ວນຫລາຍ ນັບຖືສາ ສະໜາພຸດ ສະທ້ອນໃຫ້ເຫັນຢູ່ຕາມວັດ ວາອາຮາມອັນເກົ່າແກ່. ໂດຍສະເພາະ ວັດສີບຸນເຮືອງ ເລົ່າກັນວ່າ ສ້າງແຕ່ ກ່ອນການມາຕັ້ງເມືອງທົ່ງສາ ມີອາຍຸ 400 ກວ່າປີ. ວັດນີ້ ຍັງສະສົມຄຳພີ ໃບລານໄວ້ຫລາຍກວ່າໝູ່ມີເຖິງ 888 ຜູກ ແລະ ມີອາຍຸເກົ່າແກ່ຮອດ 150 ກວ່າປີ. ທ່ານຫົວ ໜ້າຫ້ອງການ ວັດທະນະທຳ ເມືອງ ພາຄະນະ ໄປຢ້ຽມຊົມວັດ ທົ່ງ ທີ່ຢູ່ໃນເທສະ ບານເມືອງ, ວັດ ສີບຸນເຮືອງ, ວັດ ຈອມແຈ້ງ, ວັດ ພະທາດບໍຣົມ. ຈາກນັ້ນ ອອກ ເດີນທາງປະມານ 30 ກິໂລແມັດ ສູ່ ເມືອງເງິນ ທີ່ມີ ຊາຍແດນຕິດກັບ ແຂວງນ່ານ ຂອງ ປະເທດໄທ.



* ພະສົງ ວັດດອນໄຊ, ເມືອງເງິນ, ແຂວງໄຊຍະບູລີ ເອົາໃຈໃສ່ ຄົ້ນຄວ້າອ່ານຮຽນຕົວທຳລື້.

ຜ່ານໄປຮອດ ຄະນະຂອງພວກ ເຮົາ ກໍປະທັບໃຈ ກັບ ສະເໜຂອງ ທຳມະຊາດ ແລະ ວັດທະນະທຳທີ່ຍັງ ເຊື່ອງຊຸ່ອນຢູ່ກັບ ພູຜາປ່າດົງ. ປະຊາຊົນຢູ່ແຖບນີ້ ສ່ວນ ຫລາຍເປັນຊົນເຜົ່າລື້ ດັ່ງນັ້ນ ໃນ ທາງສາສະໜາຈຶ່ງບັນທຶກ ດ້ວຍຕົວ ທຳລື້. ພະສົງຜູ້ໜຸ່ມນ້ອຍ ຍັງມີຄວາມ ສາມາດໃນການຈານ ແລະ ສ້າງໜັງ ສືໃບລານທີ່ໄດ້ຮັບການຖ່າຍທອດມາ ຫລາຍຮຸ່ນຄົນ. ອຸປະກອນການສ້າງ ການຈານໜັງສືໃບລານ ຍັງມີຄົບຖ້ວນ ຢູ່ຕາມວັດຕ່າງໆ. ເຖິງວ່າຈະບໍ່ມີໂຮງ ຮຽນສົງ ແຕ່ພະເນນອ່ານໜັງສືທຳລື້ ດ້ວຍທຳນອງທີ່ມ່ວນຈັບໃຈ ສະແດງໃຫ້ ເຫັນວ່າ ວັດທະນະທຳທາງໃບລານຍັງ ຢູ່ນຳຊີວິດເຂົາເຈົ້າມາຕະຫລອດ, ເປັນ ຄວາມປະທັບໃຈທີ່ດຶງດູດໃຫ້ຄະນະໂຄງ ການໃບລານ ຈະຕ້ອງໄດ້ຮີບຮ້ອນມາ ປົກປັກຮັກສາວັດທະນະທຳໃບລານ ນີ້ໄວ້ ກ່ອນທີ່ຈະບໍ່ມີສິ່ງໃຫ້ປົກປັກ ຮັກສາ.

ທີ່ ຫລວງພະບາງ ແລະ ວຽງຈັນ. ເລີ່ມແຕ່ເດືອນ ເມສາ ໜ່ວຍສຳຫລວດໃບລານປະຈຳແຂວງ ຫລວງພະບາງນຳໂດຍທ່ານ ອ່ອນຈັນ ສະໝອນ ນັກວິຊາການ ຈາກພະແນກ ຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຫລວງພະບາງ, ກໍ່ສືບຕໍ່ສຳ ຫລວດໄດ້ 6 ວັດ ຄື : ວັດອາຮາມ, ວັດເກົ່າໄທ, ວັດສະແກ້ນ, ວັດປ່າ ຫຍ້າທີບ, ວັດພົນຫລວງ ແລະ ວັດໂພນ ສົງ ມີໜັງສືໃບລານທີ່ຂຶ້ນທະບຽນ 2441 ຜູກ ລວມ ມີ 151 ມັດ, ປັດຈຸບັນ

ພ້ອມດຳເນີນ ການສຳຫລວດຢູ່ວັດທາດຫລວງ ວັດມະຫາທາດ ແລະ ວັດໂພນໄຊ ໂດຍມີທ່ານມະຫາບຸນຍົກ ແສນສູນທອນ ນຳພາ.

ຢູ່ທີ່ໂຄງການ ວຽກງານຖ່າຍໄມໂຄຟີມ ເປັນວຽກຫນຶ່ງທີ່ຄຽງຄູ່ໄປກັບການສຳຫລວດ ແລະ ກໍ່ເປັນວິທີອະນຸລັກໃນລະດັບດີເລີດເພື່ອປ້ອງກັນການຕົກເຮ່ຍເສຍຫາຍ ແລະ ກໍ່ສາມາດນຳໃຊ້ໄດ້ຢ່າງກ້ວາງຂວາງ. ທາງຫນ່ວຍໄດ້ສືບຕໍ່ ນຳເອົາຫນັງສືໃບລານຈາກຫໍສະຫມຸດແຫ່ງຊາດ ທີ່ໄດ້ຂຶ້ນບັນຊີແລ້ວໃນປີ 1991 ມາຖ່າຍທຳ 5.579 ກວ່າຜູກ. ຫນັງສືທີ່ຢູ່ ຫໍສະຫມຸດແຫ່ງຊາດ ນັບວ່າເປັນເອກະສານສຳຄັນ ສະນັ້ນ ທາງໂຄງການໄດ້ຕົກລົງຖ່າຍໄວ້ເກືອບທັງຫມົດ.



* ລຸງທິດເພັງ ນັກສືຕໍ່ ຂອງຄະນະບ້ານທາດຫລວງ ໃຊ້ເວລາຫລ່າງ ຈັດບັນຊີຫນັງສືໃບລານ ຊ່ວຍຫນ່ວຍສຳຫລວດ

**ສົ່ງເສີມການຄົ້ນຄວ້າເພື່ອການອະນຸລັກ.**

ໄປຄຽງຄູ່ກັບການອະນຸລັກ ຫນັງສືໃບລານ, ໂຄງການຍັງມີນະໂຍບາຍຊຸກຍູ້ສົ່ງເສີມການຄົ້ນຄວ້າ, ສຶກສາເອກະສານບູຮານ ພ້ອມທັງມີການນຳໃຊ້ສິ່ງດີງາມທີ່ມີຢູ່ໃນຫນັງສືໃບລານດ້ວຍການປະລິວັດ ລິດຈະນາ ແລະ ພິມເຜີຍແຜ່ ເພື່ອອຳນວຍຄວາມສະດວກໃຫ້ມະຫາຊົນ ໄດ້ມີໂອກາດສຶກສາຮ່ຳຮຽນ ແລະ ນຳໃຊ້ໃນຊີວິດປະຈຳວັນ.

ໃນວັນທີ 20 ເດືອນມີນາ 1995 ຢູ່ທີ່ຫ້ອງການໃບລານມີການເຕົ້າໂຮມ, ປຶກສາຫາລືແລກປ່ຽນລະຫວ່າງນັກຄົ້ນຄວ້າວັນນະຄະດີ ໂດຍການເປັນປະທານ ຂອງ ນາງ ດາລາ ກັນລະຍາ ຫົວຫນ້າໂຄງການ ຜູ້ທີ່ເຂົ້າຮ່ວມມີ ທ່ານບຸນເລີດ ທຳມະຈັກ ຄະນະໂຄງການ, ທ່ານເຂັມພອນ ແສງປະທຸມ, ທ່ານກາວິນ ຈາກກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ຄູອາຈານ 6 ທ່ານ ຈາກພະແນກວັນນະຄະດີ ພາສາສາດ ມະຫາວິທະຍາໄລ ສ້າງຄູດົງຈັນ (ດົງໂດກ) ໃນກອງປະຊຸມຫລາຍຄົນໄດ້ສະເຫນີວຽກການຄົ້ນຄວ້າຂອງຕົນ ເພື່ອນຳມາ ປຶກສາຫາລື ແລະ ຂໍຄວາມຮ່ວມມືຈາກໂຄງການ ຜ່ານມາທາງໂຄງການໄດ້ປະກອບສ່ວນໃນການສ້າງ ສາລະຄະດີອັບຮົ່ມ, ພິມປຶ້ມຫັດອ່ານຫນັງສືທຳ, ໃຫ້ທຶນຈັດພິມປຶ້ມເພື່ອການສຶກສາສົງ ໆລໆ.

## ເຊີນອ່ານ


❀ ຄວາມຊົງຈຳຈາກອະດີດ

❀ ນາບາ ທັດສະນະ

❀ ສາບໄກ່ແກ້ວ

❀ ພິທີຕັ້ງເສົາແຮກເສົາຂວັນ

❀ ນ້ຳໃຈ ຂອງສາທຸ ອ້ວນ


**ລັດຖະບານ ສ.ສ.ເຢຍຣະມັນ ມອບທຶນອຸປະຖຳ**

ສະເພາະ ໃນສົກປີ 1994-1995 ນີ້ ລັດຖະບານ ສ.ສ.ເຢຍຣະມັນ ໄດ້ມອບທຶນອຸປະຖຳ ໃຫ້ແກ່ໂຄງການ ມູນຄ່າ 131.669.470 ກີບ.

ທຶນອຸປະຖຳນີ້ ນຳໃຊ້ເຂົ້າໃນການປົກປັກຮັກສາຫນັງສືໃບລານ ຢູ່ແຂວງຫລວງພະບາງ, ໄຊຍະບູລີ, ກຳແພງນະຄອນ, ນອກນັ້ນ ຍັງຈະນຳໃຊ້ເຂົ້າໃນວຽກງານຖ່າຍໄມໂຄຟີມ, ເຂົ້າຂໍ້ມູນຄອມພິວເຕີ, ຈັດພິມບັນຊີ ແລະ ເຮັດປຶ້ມສຳເນົາໃບສຳຫລວດ, ຈັດຊື້ເຄື່ອງຂະຫຍາຍ ແລະ ພິມໄມ ໂຄຟີມ ( PRINTER ) ແລະ ອຸປະກອນ ອື່ນໆ.

# ຄວາມຊົງຈຳ ຈາກອະດີດ

ດຣ. ທອງຄຳ ອ່ອນມະນີສອນ

*( ຄັດຈາກບົດປະກອບຄຳເຫັນທາງວິຊາການ ໃນກອງປະຊຸມສະຫລຸບວຽກງານ ອັ້ບບັ້ນຊີໜັງສືໃບລານ 4 ແຂວງພາກໃຕ້ ທີ່ແຂວງສະຫວັນນະເຂດ, ວັນທີ 17-21/4/95)-*

( ຕໍ່ຈາກສະບັບກ່ອນ )



✱ *ໜັງສືໃບລານ ທີ່ຈານດ້ວຍລວດລາຍງົດງາມ ຫາເບິ່ງໄດ້ຍາກ ຈາກ ວັດຈອມແຈ້ງ, ເມືອງແກ່ນທ້າວ, ແຂວງໄຊຍະບູລີ*

**(2) ໜັງສືຜູກໃບລານ ?**

ໜັງສືຜູກໃບລານ ຫລື ໃບລານ ໃນຄວາມໝາຍ ຄວາມຊົງຈຳຈາກອະດີດນີ້ : ແມ່ນໜັງສື ວັນນະກຳ, ຄຳພີດີກາ, ຕຳນານຕຳລາ ປະເພດຕ່າງໆ ທີ່ຄົນລາວບູຮານ ໃຊ້ເຫລັກຈານຂຽນບັນທຶກໄວ້ໃນໃບລານ ເຊິ່ງຈັດເປັນຜູກ ເປັນມັດ ແລ້ວເກັບມ້ຽນໄວ້ໃນຕູ້ຄຳພີ, ຫໍໄຕ ຫລື ຮ້ານພະ, ເພື່ອການສຶກສາ ສິລະປະວິທະຍາ ແລະ ສາດຕ່າງໆ.

**ໜັງສືໃບລານແມ່ນໜັງສືປະເພດຕ່າງໆ ເຊັ່ນ :**

**1. ປະເພດຄຳພີດີກາ :** ພະສູດ, ພະວິໄນ, ພະອະພິທຳ, ຊາດົກ 10 ຊາດ ຊາດົກ 50 ຊາດ, 500 ຊາດ ( ວັນນະຄະດີພຸດທະສາສະໜາ ).

**2. ປະເພດວັນນະຄະດີ ຄຳກອນ ແລະ ຄຳທຳມະດາ**

- ສິນໄຊ , ກາລະເກດ, ຂຸນລູນາງອົ້ວ, ແຕງອ່ອນ, ຈຳປາສີ່ຕົ້ນ, ລິນທອງ, ຊຽງໝ້ຽງ, ສານລຶບພະສູນ, ພະລັກພະລາມ, ສຽວສະຫວາດ, ອິນທິຍານສອນລູກ ແລະ ນິທານຕ່າງໆ ຫລາຍຮ້ອຍຫລາຍພັນເຫລັ້ມ.

**3. ປະເພດຕຳນານ, ພົງສາວະດານເລື່ອງພື້ນເມືອງຕ່າງໆ**

- ນິທານຂຸນບູລົມ, ພົງສາວະດານ, ພື້ນວຽງ, ຕຳນານຫລວງພະບາງ ຕຳນານພະບາງ, ຕຳນານພະແກ້ວມໍລະກົດ , ຕຳນານອຸລັງຄະນິທານ.

- ນິທານໝາກນ້ຳເຕົ້າປຸງ, ເສືອເຂົ້າກາດ,ຕຳນານພະອົງຕື້, ພະແຊກຄຳ ແລະ ອື່ນໆ.

**4. ປະເພດຕຳລາວິທະຍາສາດບູຮານ**

-ໂຫລາສາດ, ກົດໝາຍບູຮານ ທຳມະສາດຫລວງ, ມູນລະຕັນໄຕ, ສ້ອຍສາຍຄຳ, ແລະ ອື່ນໆ.

ນອກນັ້ນ ຍັງມີໜັງສືປະເພດຕ່າງໆ ເຊັ່ນ : ສິລາຈາລຶກ, ຄຳສອນ, ຄຳພະຫຍາຫຍ່ອຍ, ໜັງສືກ້ອມ, ສານຕ່າງໆ...

**II ໜັງສືຜູກໃບລານສະໄໝ ອານາຈັກລ້ານຊ້າງ**

ເປັນທີ່ຍອມຮັບນຳກັນວ່າ ສະໄໝກາງສະຕະວັດທີ 14 ຄືສະໄໝເຈົ້າຟ້າງຸ່ມມະຫາລາດນັ້ນ ຖືວ່າເປັນຍຸກທີ່ສາມາດຮູ້ເຖິງຮ່ອງຮອຍທາງປະຫວັດສາດໄດ້ດີກວ່າສະໄໝກ່ອນ.

ໃນສະໄຫມຟ້າງຸ່ມນີ້ ປວງຊົນລາວບັນດາເຜົ່າ ໄດ້ສາມັກຄີກັນເປັນເອກະພາບ ເປັນຍຸກທີ່ສັງຄົມລາວ ໄດ້ມີການຈັດສັນຫລັກການ, ການປົກຄອງ ແລະ ຄຸ້ມຄອງລັດເອກະລາດ ເປັນຍຸກທີ່ເລີ່ມໃຊ້ຮູບການປົກຄອງແບບມີຫລັກການ ໂດຍຖືເອົາລາຊະໂອອາດ ຂອງພະເຈົ້າຟ້າງຸ່ມເປັນກົດຫມາຍຫລັກ.

ພ້ອມກັນນີ້ ກໍເປັນຍຸກທີ່ເລີ່ມ ເນັ້ນຫນັກໃສ່ ສິນ 5 ແລະ ທຳມະໃນພະພຸດທະສາສະຫນາ ແລະ ຖືເອົາພຸດທະປັດຊະຍາ ເປັນບ່ອນອີງທາງແນວຄິດ ໃຫ້ແກ່ໂລງບົນ ແລະ ເປັນຮູບຖານສະຕິສັງຄົມ ຫມາຍຄວາມວ່າ ເປັນຍຸກເລີ່ມເຂົ້າສູ່ຄວາມ ຈະເລີນທາງວັດທະນະທຳພຸດທະສາສະຫນາ. ໃນພາກປະຕິບັດຕົວຈິງ ພະເຈົ້າຟ້າງຸ່ມ ໄດ້ອາລາທະນານິມົນ ເອົາພະເຖລະອົງສຳຄັນຫລາຍອົງ ແລະ ໄດ້ເຊີນເອົານັກປາດ ທາງພຸດທະສາສະຫນາ ຈາກເມືອງນະຄອນຫລວງ ກຳປູເຈຍ ພ້ອມດ້ວຍພະບາງ ແລະ ພະໄຕປິດົກ ຄຳພີຕິການາສູ່ປະເທດລ້ານຊ້າງ. ພະອົງໄດ້ຮ່ວມກັບນັກປາດອາຈານ ແລະ ປວງຊົນລາວ ສ້າງວັດວາອາຮາມຂຶ້ນຢ່າງຫລວງຫລາຍ ເປັນຕົ້ນແມ່ນວັດແກ້ວ ເຊິ່ງເປັນສີ ແລະ ໄຊມຸງຄຸນ ໃຫ້ແກ່ຫລວງພະບາງ. ບັນດາພະສົງ ອົງລະເຈົ້າ, ນັກປາດອາຈານ, ນັກປະພັນ ນັກກະວີ ໄດ້ພາກັນຈົດກ່າຍຄຳພີພະສູດ, ພະວິໄນ ພະອະພິທຳ ແລະ ປະກິດຄິດ ແຕ່ງອັນນະກຳພຸດທະສາສະຫນາອອກມາຢ່າງຫລວງຫລາຍ ແລະ ກໍຈັດຕັ້ງການເຜີຍແຜ່ພຸດທະສາສະຫນາ ຢ່າງກວ້າງຂວາງ ເລີ່ມແຕ່ນັ້ນມາ.

ໂດຍຜ່ານຍຸກສະໄຫມຕ່າງໆ ເປັນຕົ້ນແມ່ນຍຸກຂອງພະຍາສານແສນໄຕ, ວິຊຸນນະລາດ, ໂພທິສາລະລາດ, ໄຊຍະເຊດຖາທິລາດ ກໍມີການສ້າງວັດຂຶ້ນຫລາຍຢ່າງບໍ່ຂາດໄລຍະ ເຊັ່ນ : ວັດຫມື່ນນາ, ວັດອະໄພ, ວັດວິຊຸນ ແລະ ອື່ນໆ.

ໃນຂະນະທີ່ ວຽງຈັນຖືກສະຖາປະນາຂຶ້ນ ເປັນລາຊະທານີ ສະໄຫມພະເຈົ້າໄຊຍະເຊດຖາທິລາດ ສະຕະວັດທີ 17 ນັ້ນ ກໍມີວັດທີ່ໄດ້ສ້າງຂຶ້ນແລ້ວເຖິງ 70 ວັດ ໂດຍບໍ່ນັບວັດພະແກ້ວ ແລະ ວັດທາດຫລວງ.

ການທີ່ໃນແຕ່ລະຍຸກສະໄຫມຂອງປະຫວັດສາດລາວ ມີການຂະຫຍາຍວັດວາອາຮາມນັ້ນ ມັນຫມາຍເຖິງການຂະຫຍາຍຕົວ ແລະ ການພັດທະນາຫນັງສືຜູກໃບລານ ກໍຄືຫນັງສືປະເພດຕ່າງໆ ຢ່າງຫລວງຫລາຍ ມັນບໍ່ສະເພາະແຕ່ຫມາຍເຖິງການພັດທະນາ ເສີມຂະຫຍາຍ ສິ່ງທີ່ມີ ຢູ່ໃນຄຳພີກາຂອງພຸດທະສາສະຫນາ ແລະ ການປົກປັກຮັກສາອັນເກົ່າແກ່ເທົ່ານັ້ນ ແຕ່ມັນຍັງຫມາຍເຖິງການປະດິດຄິດແຕ່ງ ວັນນະກຳປະເພດຕ່າງໆ ອອກມາເປັນວັດທະນະທຳ ແລະ ສົມບັດນໍລະດົກທາງປັນຍາຂອງຊາດອີກດ້ວຍ. ພວກເຮົາສາມາດຍົກຕົວ ຢ່າງບາງຍຸກທີ່ຈະເລີນຮຸ່ງເຮືອງ ດ້ານສິລະປະວັດທະນະທຳ ດັ່ງນີ້ :

**1. ຍຸກວິຊຸນລະຮາດ : ສະຕະວັດທີ 16**

- ໄດ້ມີການຮຽບຮຽງນິທານປັນຈະຕັນຕະຣະນາງຕັນໄຕ (ຂອງອິນເດຍ).
- ຮຽບຮຽງ ແລະ ຂຽນເລື່ອງພະລັກພະລາມ
- ຂຽນເລື່ອງທ້າວຮຸ່ງ ທ້າວເຈືອງ
- ສືບທອດ ແລະ ຂຽນນິທານຂຸນບູລົມ ແລະ ອື່ນໆ
- ສືບທອດ ແລະ ແປພະໄຕປິດົກ
- ຂຽນເລື່ອງ ເວດສັນດອນຊາດົກ
- ໃນສະໄຫມນີ້ພວກເຮົາຮູ້ໄດ້ວ່າປະຫວັດການຂຽນການກອນໄດ້ຜ່ານ :

→



ຈິດຕະກຳຝາຜະຫນັງ ວັດສີມຸງຄຸນພະຍາດ. ເມືອງຫລວງພະບາງ

(ກ) ຂະບວນການ **ແປຍົກສັບ** ຈາກພາສາຄາຖາປາລີເປັນຄວາມລາວ

ຄວາມຈິງເລື່ອງການແປນີ້ ໄດ້ເລີ່ມມາແຕ່ສະຕະວັດທີ 15 ພຸ້ນ ແຕ່ບໍ່ປາກົດເດັ່ນຊັດ.

ການສຳຜັດໃນສຳຜັດນອກ ເກາະກ່າຍ ມ່ວນອອນຊອນ ມີລະບຽບຫລັກການ ເນື່ອງສຽງໄມ້ເອກ ໄມ້ໂທ ຄືດັ່ງກອນ ວິດຊຸນາລີ.

2. **ຍຸກພະເຈົ້າໄຊຍະເຊດຖາທິລາດ :** ໄດ້ມີວັນນະກຳຫລາຍເລື່ອງເກີດຂຶ້ນ :

- ຕຳນານພະແກ້ວ
- ຕຳນານພະແຊກຄຳ
- ໜັງສືອຸລັງຄະທາດ ແລະອື່ນໆ.

ພິເສດໃນຍຸກນີ້ ແມ່ນຄວາມຮຸ່ງເຮືອງທາງດ້ານ **ສະຖາປັດຕະຍະກຳ** ປະເພດຕ່າງໆ :

1. **ທາດ :** ມີທາດຫລວງ, ທາດສີສອງຮັກ, ທາດບັງພວນ, ທາດພະນົມ, ທາດສີໂຄດຕະບູນ, ທາດອິງຮັງ....

2. **ວັດ :** ວັດພະແກ້ວ , ວັດຊຽງທອງ, ວັດອິນແປງ, ວັດສີມູນເມືອງ, (ໜອງຄາຍ),ວັດສີສະເກດ ( ໜອງຄາຍ ) , ວັດໄຊເຊດຖາ

*ອ່ານຕໍ່ໜ້າ 12*





*ວັດສີສີ, ເມືອງຫລວງພະບາງ*

*ພະທາດ ສີໂຄດຕະບອງ ແຂວງຄຳມ່ວນ*

(ຂ) ຂະບວນທີສອງ ຄື ຂະບວນແປ ແລະຂຽນແບບຍົກຄາຖາຂຶ້ນ ຫລືແບບຄຳຮ້ອຍຄາຖາກ່ອນ ເຊັ່ນ ເລື່ອງພະເວດ. ໝົດເລື່ອງ ມີຄາຖາທີ່ເປັນພາສາປາລີຢູ່ 1000 ຄາຖາ ເອີ້ນຄາຖາພັນ. ແຕ່ເວລາອອກເປັນຄວາມລາວແລ້ວ ເພິ່ນແຕ່ງເປັນ **ແບບກອນຮ່າຍ :** ແລະ ເປັນກອນຮ່າຍ ທີ່ຖືໄດ້ວ່າລະດັບຊັ້ນຍອດຢ້ຽມ ຕົວຢ່າງ :
*ຊ້າງກໍ່ວ່າຊ້າງຈັກຊິບ ຄົນກໍ່ວ່າຄົນຈັກແລ່ນ ມ້າກໍ່ວ່າຈັກທືລະແທ່ນ ແລ່ນເຕາະໄປ...*

ແລະ ເລີ່ມເຂົ້າສູ່ໄລຍະທີ 3 ຄື **ຂະບວນຄຳກອນ** ( ຄຳຮ້ອຍກອງ ) ຄຳໂຄງ, ຄຳຮ່າຍຕ່າງໆ - ເຊັ່ນ ກອນໃນເລື່ອງທ້າວຮຸ່ງທ້າວເຈືອງ ເຊິ່ງສັນນິດຖານວ່າແຕ່ງຂຶ້ນໃນສະໄໝນີ້ ມີ

## ນານາ ທັດສະນະ

*( ຄວາມເຫັນຈາກກອງປະຊຸມ ສຳມະນາ ການປົກປັກຮັກສາ ໜັງສືໃບລານ ທີ່ແຂວງໄຊຍະບູລີ ວັນທີ 29-31/ມີນາ 1995 )*



**ທ່ານ ທອງສຸກ ໄຊຍະລາດ ຫົວໜ້າຜະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງໄຊຍະບູລີ**

"ຜ່ານຂະບວນການອະນາໄມ, ຂຶ້ນທະບຽນໜັງສືຜູກໃບລານມານັ້ນ, ສຳຫລັບພວກຂ້າພະເຈົ້າແລ້ວ ຖືວ່າແມ່ນການກອບກູ້ເອົາມໍລະດົກ ສະຕິປັນຍາຂອງຊາດ ກັບຄືນມາອີກ ຖືວ່າ ເປັນເຫດການປະຫວັດສາດ ໃນທ້ອງຖິ່ນຂອງພວກຂ້າພະເຈົ້າ ເຖິງຢ່າງໃດກໍ່ຕາມ ປະຊາຊົນຢູ່ທາງ 4 ເມືອງເໜືອ ຍັງຄອງຄອຍຢ່າງຈົດຈໍ່, ດ້ວຍສັດທາອັນສູງສົ່ງ"



**ນາງ ບຸນຜັກ ອິນທະປັນຍາ ຫົວໜ້າຜະແໜກສຶກສາແຂວງໄຊຍະບູລີ**

ເປີດໂອກາດໃຫ້ແຕ່ລະພາກສ່ວນ ທີ່ມີໜ້າທີ່ຮັບຜິດຊອບຕໍ່ໂຊກຊາຕາຂອງໜັງສືໃບລານ ໄດ້ມາພົບປະແລກປ່ຽນ, ຖອດຖອນບົດຮຽນທັງອະດີດ, ປັດຈຸບັນເພື່ອອະນາຄົດ ບໍ່ສະເພາະແຕ່ວຽກງານໃບລານເທົ່ານັ້ນ ແຕ່ເພື່ອປົກປັກຮັກສາສິ່ງທີ່ພວກເຮົາເອີ້ນວ່າ ມໍລະດົກອັນປະເສີດຂອງຊາດ.



**ຈານ ບົວລີນ ແກ້ວປະເສີດ ແນວລາວສ້າງຊາດເມືອງໄຊຍະບູລີ**

"ກອງປະຊຸມສຳມະນາຄັ້ງນີ້ ແມ່ນການນຳເອົາພູມປັນຍາຈາກບັນດານັກປາດອາຈານມາປູກຈິດສຳນຶກ ແລະ ຄວາມຄິດໃໝ່ໆຂຶ້ນມາ ວ່າຈະຕ້ອງໄດ້ປະສານສົມທົບຍຸກສະໄໝກັບມໍລະດົກອັນດັ້ງເດີມ ຂອງເຮົາເພື່ອສ້າງເອກະລັກໃໝ່ ຂຶ້ນມາບົນພື້ນຖານອັນດັ້ງເດີມທີ່ມີຢູ່ແລ້ວນີ້ ແມ່ນບັນຫາສຳຄັນ.



**ທ່ານ ທອງຜັດ ຈັນທະລາ ຫົວໜ້າຫ້ອງການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເມືອງໄຊຍະບູລີ**

ວຽກງານປົກປັກຮັກສາໃບລານ ເປັນວຽກງານໃໝ່ສຳລັບພວກເຮົາບັນຍາກາດໃໝ່ໆກໍ່ເກີດຂຶ້ນ ນິຫຸກພາກສ່ວນເຂົ້າຮ່ວມໃນການອະນຸລັກ ເຮັດໃຫ້ພະສົງມີສະຕິລະວັງຕົວຂື້ນຕື່ມ ສະແດງອອກບ່ອນວ່າ ບາງວັດທີ່ຍືມໜັງສືໃບລານໄປກໍ່ມີການສົ່ງຄືນ. ໃນຕົວເມືອງໄຊຍະບູລີນີ້ ມີຫລາຍວັດທີ່ບໍ່ທັນໄດ້ປົກປັກຮັກສາກໍ່ຮຽກຮ້ອງມາ, ພວກເຮົາກໍ່ມີແຜນຈະ ສົມທົບຜະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ໂດຍອີງໃສ່ວິຊາການ ທີ່ໄດ້ຮ່ຳຮຽນມາຈາກໂຄງການນີ້ແຫລະ !



**ພະອາຈານວຽງແກ້ວ ບຸນລະບົວພາ ຄະນະສຶກສາສົງແຂວງ**

ປັດຈຸບັນໂຄງການປົກປັກຮັກສາໜັງສືໃບລານ ເປັນແຮງຍູ້ດັນອັນມະຫາສານເຮັດໃຫ້ພະສົງສາມະເນນ ແລະ ພຸດທະສາສະນິກຊົນທັງຫລາຍ ໃນແຂວງໄຊຍະບູລີ ຮູ້ຈັກຫວງແຫນ, ຕື່ນຕົວຢາກຮູ້ຢາກຮຽນ, ເອົາໃຈໃສ່ຖະໜອມລ້ອມແປງ. ໃນນາມອາດຕະມາ ຕາງໜ້າໃຫ້ ພ.ສ.ລ. ແຂວງ ຈະສານຕໍ່ ວຽກງານນີ້ຮ່ວມກັບທຸກພາກສ່ວນຕໍ່ໄປ...



**ທ່ານ ສົມບູນ ດວງພະຈັນ ຫົວໜ້າຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງເງິນ**

"ຂ້າພະເຈົ້າຄິດວ່າ ການເດີນທາງຈາກເມືອງເງິນມາເຖິງໄຊຍະບູລີ ຄັ້ງນີ້ມັນກຸ້ມຄ່າ, ເພາະປະຊາຊົນເມືອງເງິນກໍ່ຄອງຄອຍການມາຢ້ຽມຢາມຂອງໂຄງການຢູ່, ຄວາມຈະເລີນທາງເສດຖະກິດ, ການທ່ອງທ່ຽວ,ພອມຈະເຮັດໃຫ້ເອກະລັກວັດທະນະທຳ ແລະ ວິຖີຊີວິດຂອງສັງຄົມເມືອງເງິນປ່ຽນໄປ ຖ້າບໍ່ມີການອະນຸລັກຮັກສາໄວ້ກ່ອນ, ໂດຍສະເພາະວັດທະນະທຳໃບລານ.



**ທ່ານ ຄຳໝັ້ນ ຜົນທຸລັກ, ຫົວໜ້າຫ້ອງການຖະແຫລງຂ່າວ ວັດທະນະທຳ ເມືອງ ທົງສາ**

ໂຄງການນີ້ ໄດ້ກະຕຸກຊຸກຍູ້ໃຫ້ຈິດໃຈຂອງປະຊາຊົນ ນັບທັງພະສົງສາມະເນນ, ເຖົ້າແກ່ອາວຸໂສ ເພີ່ມຄວາມຮັກ, ຄວາມຫວງແຫນ ຕໍ່ໜັງສືໃບລານ ຂຶ້ນຕື່ມ.



**ທ່ານ ເປັນ ສຸນາເຄນ ຫົວໜ້າຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງປາກລາຍ**

ໃນເມື່ອກ່ອນ ຄວາມເຂົ້າໃຈກ່ຽວກັບໜັງສືໃບລານ ນອກຈາກພະສົງສາມະເນນ ແລະ ຜູ້ເຄີຍບວດເຄີຍຮຽນແລ້ວ ເກືອບວ່າຈະບໍ່ມີຜູ້ຮູ້ວ່າໂຕທຳ ແລະ ໂຕລາວສະໄໝກ່ອນອ່ານແນວໃດ. ພະສົງສາມະເນນຜູ້ຮູ້ ກໍ່ບໍ່ມີໃຜແປອອກມາເປັນຕົວລາວ ສະໄໝນີ້ ເພື່ອນຳມາຮ່ຳຮຽນ ແລະ ສຶກສາອົບຮົມໃຫ້ລູກຫລານເລີຍ. ມີແຕ່ ເກັບມ້ຽນໄວ້ໃນຕູ້ໃນຫີບ ທີ່ນຳໃຊ້ກໍມີແຕ່ນຳມາເທດເວລາເຮັດບຸນ ເຮັດທານເທົ່ານັ້ນ.

ພາຍຫລັງທີ່ໂຄງການໄດ້ມາຂຶ້ນທະບຽນ ທັງໄດ້ອະທິບາຍໃຫ້ເຫັນແຈ້ງແລ້ວ ປະຊາຊົນຈຶ່ງຮູ້ຄວາມສຳຄັນ ຂອງໜັງສືໃບລານ ນັບແຕ່ເຖົ້າແກ່, ພະສົງ ກໍ່ດີອົກດີໃຈ, ມາຮອດປັດຈຸບັນກໍ່ຍິ່ງເພີ່ມການດູແລ ຄຸ້ມຄອງດີຂຶ້ນ.

# ພິທີຕັ້ງເສົາແຮກ - ເສົາຂວັນ

*ເກັບກຳໂດຍ : ທຳມະຈັກ*

*( ຄັດຈາກໜັງສືໃບລານວັດລິ່ງຊຸ້ນ )*

ໃນການປຸກເຮືອນໃໝ່ຂອງຄົນບູຮານ ເພິ່ນມີພິທີການເພື່ອໃຫ້ເປັນສິລິມຸງຄຸນ ໃຫ້ແກ່ຜູ້ຢູ່ອາໄສ ແລະ ສືບທອດກັນມາແຕ່ປູ່ຍ່າຕານາຍ ຂ້າພະເຈົ້າເປັນຄົນຮຸ່ນໃໝ່ເກີດໄດ້ໃຫຍ່ລຸນ ແຕ່ກໍໄດ້ເຄີຍສຶກສາຮ່ຳຮຽນຈາກຜູ້ເຖົ້າຜູ້ແກ່ຮຸ່ນປູ່ຍ່າຕາທວດເພື່ອຂຸດຄົ້ນຫາວິທີການຂອງຄົນບູຮານມາເລົ່າສູ່ຟັງ, ຄວາມຈິງມີແນວໃດອາດຮູ້ໄດ້ບໍ່ພຽງພໍ ແຕ່ຂໍຍົກເປັນຕົວຢ່າງໃຫ້ລູກຫລານ ແລະ ຜູ້ສົນໃຈໄດ້ຮຽນຮູ້ຕາມ ຄວາມສາມາດ ແລະ ຄົດຄົ້ນມາໄດ້ ຫວັງວ່າບັນດາທ່ານຜູ້ຫລັກນັກປາດຄົງໃຫ້ອະໄພໃນຄວາມຜິດພາດທີ່ອາດ ຈະເກີດມີຕາມຄວາມຮູ້ນ້ອຍໆນີ້.

ພິທີການຂອງຄົນບູຮານໃນການຕັ້ງເສົາແຮກ-ເສົາຂວັນຂອງເຮືອນທີ່ຈະປຸກສ້າງ ຫລັງຈາກຊ່າງ ຫລື ຜູ້ຊຳນານໃນການວາງໂຄງຮ່າງ ໃນການປຸກສ້າງເພິ່ນຈະຂຸດຂຸມເພື່ອຝັງເສົາໄວ້ຄົບຖ້ວນແລ້ວ. ໃນມື້ຕັ້ງເສົາແຮກ-ເສົາຂວັນ ເພິ່ນຈະທຳພິທີທາງສາດສະໜາ ເປັນຕົ້ນວ່ານິມົນ ພະໄປສູດຖອດຖອນສິ່ງຊົ່ວຮ້າຍຕ່າງໆ ເພື່ອໃຫ້ບໍລິເວນທີ່ຈະປຸກສ້າງ ປອດໄພຈາກອຸປະສັກ ແລະ ພູດຜີປີສາດ ເຊິ່ງບ່ອນດັ່ງກ່າວອາດເຄີຍເປັນປ່າຊ້າ, ເປັນເຮືອນຮ້າງ ຫລື ມີເຈົ້າຖິ່ນຮັກສາ ເພິ່ນເອີ້ນວ່າເຂດທີ່ມີເຈົ້າຖິ່ນ ຫລື ເຈົ້າພູມຮັກສາ . ພິທີການສູດຊຳຮະ ແລ້ວຈະມີສິ່ງກະໂຫງ ໜ້າວົວມີເຄື່ອງບູຊາ ເຂົ້າຕົ້ມ ເຂົ້າໜົມ ຄຳໝາກ ກອກຢາ ເຂົ້າດຳເຂົ້າແດງ ແຮ່-ຊາຍ ສູດເບີກ ແລະ ສິ່ງໂຫງ.

ເມື່ອເຕົ້າໂຮມ ຍາດຕິພີ່ນ້ອງ ຫລືບາງບ່ອນເພິ່ນກໍມີນາຍຊ່າງກຳກັບ ນຳວ່າ ຈະຍົກເສົາແຮກ-ເສົາຂວັນ ກ່ອນ. ເສົາແຮກ-ເສົາຂວັນນີ້ ເພິ່ນຈະມັດສ້ອນມັດໄຊໃສ່ປາຍເສົາ ກະປະມານໃຫ້ກາຍຫົວຄົນຂຶ້ນເມືອ ພ້ອມກ່າວຄຳສະໂຫລກຄືຄຳເພິ່ນເວົ້າເປັນຄຳໂຄງ ໂດຍໃຊ້ເຄື່ອງວັດຈາກຕີນເສົາ ໄປຫາບ່ອນຈະມັດເຄື່ອງບູຊາໃສ່ ເຊັ່ນ ດອກໄມ້ເຜິ້ງທຽນ ສ້ອນໄຊ ເງິນຄຳ ແລ້ວແຕ່ຈະໃສ່.

ຄຳສະໂຫລກ ມີດັ່ງນີ້ :

<u>ຄືບທີ</u> 1 ( ຫລື ສອກ )

- ເອົາບ່ອນ ງົວ ເອົາລາຍ ນີ້ບໍ ? ຜູ້ຕອບກໍຮັບວ່າ ບໍ່
- ເອົາບ່ອນ ຄວາຍເຂົາ ງ້ອງ ບໍ ? ຜູ້ ຕອບ ກໍຮັບວ່າ ບໍ່
- ເອົາບ່ອນ ຄ້ອງເກົ້າກຳບໍ? ຜູ້ຕອບ ກໍຮັບວ່າ ບໍ່
- ເອົາບ່ອນຄຳ ເກົ້າໝື່ນບໍ ? ຜູ້ຕອບ ກໍຮັບວ່າ ບໍ່
- ເອົາບ່ອນຢູ່ຊຸ່ມກິນເຢັນ, ນີ້ບໍ ? ຜູ້ຕອບຮັບວ່າ ເອີ !

ເມື່ອບັນດາຍາດພີ່ນ້ອງ ທີ່ມາຮ່ວມຊ່ວຍກັນເລືອກວ່າ ມັກບ່ອນໃດກໍພ້ອມກັນຂານ ຕອບວ່າເອີ ! ເອົາບ່ອນນີ້ລະ ແລ້ວກໍມັດສ້ອນມັດໄຊ ເຄື່ອງບູຊາໃສ່ຫົວເສົາໄວ້ກ່ອນ. ແລ້ວກໍກະກຽມເຮັດໄມ້ຄ້ຳ, ໄມ້ຍົກເພື່ອຊູເສົາຕັ້ງຂຶ້ນ

ອ່ານຕໍ່ໜ້າ 18



*ເຮືອນແບບລາວໆ, ບ້ານກອງຫລີ່ ເມືອງຫີນບູນ ແຂວງຄຳມ່ວນ*

**ສານໄກ່ແກ້ວ** ກ່າຍຈາກລານກ້ອມ ວັດໂພຄໍາ ບ້ານບົວບານ ເມືອງປາກລາຍນີ້

ເປັນສານຂອງບ່າວສາວສະໄຫມບູຮານ ຂຽນຫາກັນ ແບບເຮົາຂຽນຫນັງສືຫາກັນທຸກມື້ນີ້ ແຕ່ໃນ ສະໄຫມກ່ອນ ບ່າວສາວມັກຮັກກັນ ເຄີຍເປັນຊູ້ກັນມາດົນ ແລະ ອາດຢູ່ໄກກັນ ເມື່ອບໍ່ໄດ້ພົບກັນ ກໍມັກຂຽນສານໄປຫາກັນ ຄືດັ່ງ ສານໄກ່ແກ້ວ ທີ່ພວກເຮົາກໍາລັງອ່ານຢູ່ດຽວນີ້ ແຕ່ເພີ່ນໃສ່ຊື່ສານຂອງເພີ່ນຫລາຍຢ່າງຕ່າງໆກັນ ເປັນຕົ້ນ ວ່າ ສານຫົງທອງ, ສານນົກແຂກແກ້ວ, ສານນົກກາງແກ ແລະ ອື່ນໆ ຕາມແຕ່ເຈົ້າຂອງສານຈະຄິດອອກ.

ຕົກມາດຽວນີ້ ພວກເຮົາບໍ່ມັກແຕ່ງສານຫາກັນຄືແຕ່ຄັ້ງບູຮານ.

ດຽວນີ້ ສານແບບນີ້ ນັບມື້ຫາຍາກ ແລະ ອາດຈະບໍ່ໄດ້ພົບອີກແລ້ວ ຍ້ອນວ່າ ພວກເຮົາບໍ່ນິຍົມ ຄົນສູ່ມື້ນີ້ ອາດຈະ ໂທລະສັບ ຫລື ສົ່ງ ໂທລະເລກແທນ ຊຶ່ງມັນໄວທັນໃຈແຕ່ອາດບໍ່ເລິກເຊິ່ງຄືແຕ່ກ່ອນ.

ດັ່ງນັ້ນ ເມື່ອຂ້າພະເຈົ້າໄປພົບໃນໃບລານເກົ່າໆ ຂາດຕິດຂາດຕໍ່ ກໍເລີຍອົດສາຂຽນມາລົງໃນຂ່າວໃບລານໃຫ້ນັກ ແຕ່ງເຮົາໄດ້ອ່ານເບິ່ງ ແລະ ເອົາເປັນແບບຢ່າງທາງສໍານວນການແຕ່ງຕໍ່ໄປ.

*ບ. ແສນສຸນທອນ*

# ສານໄກ່ແກ້ວ

*ສຶດຈະນາໂດຍ : ມະຫາບຸນຍົກ ແສນສຸນທອນ*
*ຈາກຫນັງສືໃບລານວັດໂພຄໍາ, ບ້ານບົວບານ, ເມືອງປາກລາຍ*
*ແຂວງ ໄຊຍະບູລີ.*

| | |
|---|---|
| ສານນີ້ ກາບຫາກຈໍາຈາກໄກ່ແກ້ວ | ແພງແສນສຸດທີ່ປ່ອງ ປາງນີ້ |
| ມາພົບ ບາດພໍ່ແລນ້ອຍ | ຄາແລ້ວຄາດໄກ |
| ຄຶດຈັກ ປາຖະຫນາຫມັ້ນ | ຫມາຍນໍາໃຫ້ຫມົດຊົ່ວ ຊີວັງແລ້ວ |
| ບໍ່ໄດ້ ໄຫວຫວັ່ນຫລົ້ງ | ຫລົງຮູ້ຮ່າວຈາ ອຸ່ນເຍີຍ |
| ເນັກຄະຊາດເຊື້ອ | ແກ້ວແກ່ນຈັບແດງ ພີ່ເອີຍ |
| ຜິວຜາງງາມ | ເຜັດທອງທັງຄ້າຍ |
| ສຸດທີ່ ຄອງໄກລ້ໍາ | ອະຈິນໄຕຫມົດທີ່ອ້າວ ເອງແລ້ວ |
| ພີ່ຜູ້ ນອນຄຶກຮ້າງ | ຊິນອນເຝົ້າແຕ່ອ້ອນ |
| ຄໍາຮັກຄໍາມັກມີທໍ່ຟ້າ | ໃຕ້ຕ່ໍາເອົາຂຽວ |
| ພີ່ນີ້ ເປັນຄົນເບົາເທິງຕີນ | ຊິຄອຍແນມນ້ໍານ້ອງ |
| ປຽວທໍ່ ກໍາເສຍສຽງ | ບໍລະບາເສຍຊີບ ຊີວັງນັ້ນ |
| ຕາຍພີ່ຊິມຮຽນກະດູກໄວ້ | ນໍານ້ອງຜູ້ປະສົງ ນີ້ແລ້ວ |
| ເຈົ້າຜູ້ ທົງພະໄທສອຍ | ສໍຣະຍານເຍືອງສ່ອງ ຕາລີ |
| ຮູ້ວ່າ ເຈົ້າຊິໃຫ້ອີ່ພີ່ນອນຢູ່ແລ້ງ | ດາຍເຝົ້າຝຸ່ນຫຼີ |
| ຄໍາທຸກອ້າຍ | ຈອມພະນາງບໍ່ມີສ່ອງເຫັນແລ້ວ |
| ເຈົ້າຫາກ ບີທີ່ຊ້ອນ | ພາຍພຸ້ນເຫລົ່າລືມ ພີ່ແລ້ວ |
| ໄດ້ວ່າ ຍັງສັດຈະຫມັ້ນ | ໃຈດຽວຕັ້ງຕໍ່ ດອມແລ້ວ |
| ພີ່ບໍ່ ຄຶດໂລບລ້ຽວ | ລວງລື້ນແງ່ງອນ ອື່ນເຮີຍ |
| ປຽວວ່າ ພາຍພະອວນນ້ອງ | ຫລາຍໃຈຈົ່ງຕ່າງ ເສຍນັ້ນ |
| ອົກອີ່ພີ່ ຫາກໄດ້ຝັງແກ່ນແກ້ | ເສຍແລ້ວບໍ່ຮ່າງນາຍ ງ່າຍແລ້ວ |

ຂໍໃຫ້ ປະກອບແກ້ວ　　ແຝງບາດຮຽງຮີມ ຮ່ວມນັ້ນ
ຢ່າໃຫ້ ເສຍແຮງຮຽມ　　ເສີກເສຍດາຍດູ້
ຄຶດຈັກ ຍາຍແຍກໄວ້　　ເປັນແວ່ນຍໍແຍງ ສບ່ອຍນັ້ນ
ມັນຫາກ ເຫລືອແຮງຄຶດ　　ຊວດອັນໄກແກ້ວ
ພີ່ກໍ ເມົາທັງຫມ້ອນ　　ຊຸບລະຫາໃຫລລົ່ງ ເສີງແລ້ວ
ພີ່ກໍ ເມີນມຸ່ງຢຽມ　　ບໍ່ເຫັນແກ້ວທີ່ໃດ ຂີ່ນເຮີຍ
ອົກອີ່ພີ່ ລຸ້ມຮ່າວຮ້ອນ　　ເສີງແສບແສນຖຸມັດ ບໍ່ຊວ່າງແລ້ວ
ເຫລືອຫາກ ກໍາມີແນະ　　ມອບຫວງທັງສະອື້ນ
ເຈັບທີ່ ມາໄດ້ເກີດຕ່າງດ້າວ　　ໄກເຂດຄັນທະເສມາ ສິ່ງນີ້
ອົດໃຫ້ ອ້າຍໄດ້ເກີດໃນນະຄອນສີ　　ທີ່ດຽວດອມນ້ອງ ຂີ່ນເຮີຍ
ບໍ່ຢາກ ໄກຈາກແກ້ວ　　ຜໍ່ທໍ່ໃຍບົວ ຫນຶ່ງນັ້ນ
ເຈັບທີ່ ເວນຫາກມາຈໍາໄກ　　ພາກແພງຮານນ້ອງ
ວ່າຈັກ ຜາຍທາງດັ້ນ　　ເດີນນໍາທິພະຂີ່ນ ຄໍານັ້ນ
ເກງທໍ່ ເວນທ້າຮອຍ　　ໂຮມຫ້ອມເທົ່າຕີນ ຂີ່ນເຮີຍ
ເຈັບທີ່ ວັງຂວງຂັ້ນ　　ຊຸບລະທີຍາວໂຍດ
ເມື່ອຈັກ ຊຸກເຂົ້າໃກ້　　ຜໍຍື້ຢ່ອງເຖິງ ສະນ່ອຍຜມ

ພີ່ຫາກ ຂະຫລັງເອີກແຄ້ນ　　ແຄບໃນຫັດທະເຍດ ຈີເຍົາແລ້ວ
ກໍທໍ່ ຫອດຊະອື້ນ　　ຊະອອນໃຫ້ຮຸງຫາ
ກະສັນຫາກ ໄດ້ຮັກບາດທະນ້ອງ　　ລື້ນທີ່ທົບອົກ ອັ້ງແລ້ວ
ຮຽມບໍ່ ໄດ້ຜືນຄໍາແພງ　　ທໍ່ໃຜພໍ່ເຕື້ອງ ແມ່ເອີຍ
ບາດເທົ່ງຈີ່ງຊີໄດ້ຢູ່ຊອນ　　ກີ້ງກ່ອນສົມສະນີດ
ນັບນີ້ ຫມອງໃນຫວງ　　ສູ່ອັນໄກແກ້ວ ອຸ່ນເອີຍ
ຕັ້ງຫາກ ຄັວດໆຕື້ນ　　ຮີນກະສັນຮ້ອງຮໍ່າ ຊີຕາຍແລ້ວ
ອ້າຍນີ້ເປັນດັ່ງ ນົກຢູ່ຕົ້ນ　　ຂັບແລ້ວງ່ອມເຫງົາ ແມ່ເຮີຍ
ໂອນໍ ຂໍໃຫ້ໄດ້ເຜືອຝັກຝັ້ນ　　ໃນຕີຕີງຂອດ
ເພາະລາດເຈົ້າ　　ຈອນໄຫ້ທີ່ດຽວ ແດ່ຜມ
ຍອດມີ່ງແກ້ວ　　ກຸມກອດກັນລົງ ແດ່ຜມ
ຄໍາສະເນຫາ　　ຢ່າໄລນາຍນ້າງ ແມ່ເຮີຍ
ຮັກຈື່ງ ໄດ້ຂັບໄຂຫນ້າ　　ຄໍາແຜນຜານຕໍ່ ພະອວນແລ້ວ
ຮັກພີ່ຈີ່ງໄດ້ມາປາກເວົ້າ　　ວອນໄຫວ້ຫນ່ຽວແຂວນ ອຸ່ນເຮີຍ
ອ້າຍຫາກຫອນຫຸນແລ້ວ　　ກອງສີປະສົງຮ່ວນ ພະອອນແລ້ວ
ຄໍາຮັກ ຄໍາແພງ ມີແຕ່ນ້ອງ　　ຢ່າໃຫ້ຮ່າງສອງ ອຸ່ນເຮີຍ
ພີ່ນີ້ ຈິດບໍ່ມີຫາງຫ້ອຍ　　ຫົບໃດດອນເພື່ອນ ແພງເອີຍ
ທີ່ຮັກມີແຕ່ນ້ອງ　　ຕົວຂ້ອຍແອ່ງປະສົງ ຂີ່ນເອີຍ
ໂອນໍ ເຈັບທໍ່ ມາໄດ້ເກີດຕ່າງບ້ານ　　ໄກເຂດຂັນທະເສມາ ສິ່ງນີ້
ອົດຜໍ່ໃຫ້ ໄດ້ເກີດໃນນະຄອນສີ　　ທີ່ດຽວດອມນ້ອງ ອຸ່ນເຮີຍ
ເຈັບແຕ່ຜູພະນັງຂັ້ນ　　ໄກກັບອະນັນໂຍດ ແພງເຮີຍ
ສັງບໍ່ຊຸກໃຫ້ໃກ້　　ຜໍ່ຍື້ຢ່ອງເຖິງ ສະນ່ອຍເດ ./.

**ຄວາມຊົງຈຳ... ຕໍ່ຈາກໜ້າ 6**

(ຫນອງຄາຍ), ວັດຊຽງທອງ...

3. **ພະພຸດທະຮູບ :** - ພະອົງຕື້ (ວຽງຈັນ)

- ພະສຸກ ພະໃສ, ພະອົງຕື້ຊຽງຂວາງ

- ພະອົງຕື້ ບ້ານນ້ຳໂມງ ຫນອງຄາຍ ແລະ ອື່ນໆ.

4. **ສີລາເລກ :** ຈາລຶກພະທາດຫລວງ, ຈາລຶກທາດສີສອງຮັກ (1565) ຈາລຶກວັດສຸພັນຄູຫາ (ອຸດອນ) (1562) ຈາລຶກວັດແດນເມືອງ ຈາລຶກວັດໄຊເຊດຖາ ( ຫນອງຄາຍ )(1554) ຈາລຶກ ວັດສີເມືອງ(ຫນອງຄາຍ) ຈາລຶກວັດຈອມມະນີທ່າ (ຫນອງຄາຍ) 1554.

3. **ຍຸກພະເຈົ້າສຸລິຍະວົງສາ :**

ຍຸກນີ້ ຈັດວ່າເປັນຍຸກຄຳ - ຍຸກທີ່ອານາຈັກລາວລ້ານຊ້າງ ກ້າວຂຶ້ນສູ່ໄລຍະສູງສຸດ ທາງດ້ານສິລະປະວັດທະນະທຳ ແລະ ວັນນະກຳປະເພດ ກາບກອນ - ເຊິ່ງຈະເຫັນໄດ້ຈາກຫນັງສືເລື່ອງຕ່າງໆ ທີ່ຕົກເປັນມໍລະດົກຮອດພວກເຮົາໃນປັດຈຸບັນ ເຊັ່ນ :

- ສິນໄຊ, ສຸລິວົງ, ກາລະເກດ ແຕງອ່ອນ, ຜາແດງ ນາງໄອ່, ຈຳປາສີຕົ້ນ, ນິທານຕ່າງໆ ປູ່ສອນຫລານ ຫລານສອນປູ່, ສຽວສະຫວາດ, ກົດຫມາຍທຳມະສາດບູຮານຊຽງຫມັ້ນ..

- ຫນັງສືຕ່າງໆ ທີ່ບັນທຶກໄວ້ໃນໃບລານ ທີ່ເປັນຄຳກອນ ຄຳກາບ ມີຫລາຍປະເພດຄື :

**+ ກອນ ອັກສອນສັງວາດ :** ສິນໄຊ

+ ຕົວຢ່າງ :

*ຄັນວ່າ ຫລານທາກຕັດຂາດມັ້ຽນ*
*ມືອາດເອົາຄະນິງ ພໍ່ນັ້ນ*
*ຮູ້ວ່າ ນະຄອນເປັງຈານ*
*ເປົ່າສູນເສຍເຊື້ອ*
*ສ່ວນຈັກ ເປັນໄພຊ້າງ*
*ແສນຊຸມໂຮງຮອດ*
*ເມືອງມິ່ງ ໃຕ້ລຸ່ມຟ້າ*
*ໂດຍຊຸ້ນຊົ່ວປະຖົມ*

*ຫລານຜູ້ຊາຍ ຈັກຕອກເຫລົ້າຫວາຍ*
*ອັນເປັນສາຍ ຝັ້ນເຊືອກຝັ້ນປີ*



✺ *ກິຈະກຳລຳສະຫວັນ ໂດຍ ໃນສີແກ້ວ ແລະ ອັນທະລີ ໝໍລຳທີ່ດັງແຂວງສະຫວັນນະເຂດ*

ກອນຫລືບຟ້າ (ຮຸ່ງເຮືອງ)

ຕົວຢ່າງ :

*ຄອນກໍຮັບພາກກ້ອຍ ແຖວຖີ່ແຖມຄະດີ*
*ນົງແພງກູ ຢ່າຖະໄຫນທາງນັ້ນ*
*ບາສີເຈົ້າ ເຈືອງລຸນແລ້ວເລີກ*
*ຂື້ນຂີ່ມ້າ ເດີນດັ້ນຖ່ງທາງ*

ກາບ( ກາບປູ່ສອນຫລານ )

ຕົວຢ່າງ :

*ກິນເຂົ້າແລ້ວ ທາວຽກທາການ*
*ຫລານຜູ້ຍິງ ທາຫລາຫານໄຍ*

4. **ຍຸກເຈົ້າອະນຸ :** ເປັນຍຸກທີ່ປວງຊົນບັນດາເຜົ່າພາຍໃນຊາດທຳການຟື້ນຟູຟື້ນຖານ ວັດທະນະທຳລາວ ທີ່ຜ່ານໄລຍະເສື່ອມໂຊມມາໄດ້ 100 ກວ່າປີ ( 1694-1804). ການຟື້ນຟູໃນຍຸກນີ້ ນອກຈາກການບູລະນະການປົກຄອງແລ້ວ ຍັງໄດ້ປັບປຸງກໍ່ສ້າງສິ່ງໃຫມ່ ທາງດ້ານສະຖາປັດຕະຍະກຳ ແລະ ການປະດິດຄິດແຕ່ງວັນນະກຳ ຂອງຊາດ.

ວັນນະກຳ : ສານຕ່າງໆ : ສານລືບພະສູນ, ສານທົ່ງ, ສານມ້ານະປີກາບ, ສານລາລີກາ, ສານເສົາສະເພນແມ່, ສານເສົາສະເພນຜູ້, ກາບເມືອງພວນ, ເຫລົ້າຄຳ

ຕົວຢ່າງ ສານລຶບພະສູນ :

*ຄຸດທະ ອ້າປົກອື້ນ ອຳເນກເຮືອງລິດ*

*ຈັນໂທ ມົວເມົານຸກ ມີດແສງສູນອ້ຳ*

**5. ຍຸກເປັນປະເທດສະລາດ ແລະ ສະໄໝສົງຄາມທຳລາຍ.**

***ໄພອັນຕະລາຍຈາກການເປັນເມືອງຂຶ້ນ ຫລື ເປັນປະເທດສະລາດ***

ໃບລານຂອງຜູ້ຮຸກຮານ ແລະ ຊະນະສົງຄາມ ພວກເຂົາໄດ້ມີເຈຕະນາທີ່ຫນ້າຢ້ານກົວ ດັ່ງນີ້ :

(1) ປະຕິບັດການປຸ້ນເອົາມໍລະດົກ ທາງດ້ານວັດທະນະທຳ ໃນນັ້ນມີຫນັງສືໃບລານ ທີ່ດຶງໄປຈົນເກືອບຫມົດ.

(2) ປະຕິບັດການປຸ້ນ ກຳລັງປັນຍາ ກຳລັງມັນສະຫມອງ : ນັກຈິດຕະກອນ, ປະຕິມາກອນ ນາຍຊ່າງຜູ້ຊຳນານງານ.

(3) ບັງຄັບໃຫ້ລົບລາວ ຮຽນພາສາຕ່າງປະເທດໃຊ້ຫນັງສືອື່ນແທນໃບລານ ແທນຫນັງສືທຳ ແລະ ຫນັງສືລາວ.

(4) ປະຕິບັດການ ຫັນລາວໃຫ້ເປັນໄປຕາມຄວາມປາຖະຫນາຂອງຜູ້ຍຶດຄອງ ຫລື ຜູ້ຊະນະສົງຄາມ ດ້ວຍເຈດຕະນາລົບລ້າງວັດທະນະທຳ ແລະ ກືນກິນແບບບໍ່ຮູ້ສຶກຕົວ.

**5. ຍຸກເປັນເມືອງຂຶ້ນ ແບບເກົ່າ ແລະ ແບບໃໝ່**

ວັດຖຸບູຮານ, ຫນັງສືຜູກໃບລານທີ່ເກົ່າແກ່ຫາຍາກ ຖືກລັກປຸ້ນອອກໄປນອກປະເທດຈຳນວນຫລວງຫລາຍ .



*ມະຫາບຸນມີກ ແສນສຸນທອນ ຜູ້ຮອງຫົວໜ້າປະຈຳໂຄງການ ພວມອະທິບາຍເນື້ອໃນໃບລານ ໃຫ້ພະສົງສາມະເນນຟັງ*

ນອກຈາກນັ້ນ - ເນື່ອງຈາກມີການຈັດພິມຫນັງສືສູດເທດຕ່າງໆອອກເປັນປຶ້ມສະໄໝໃໝ່ຢ່າງຫລວງຫລາຍ ຄວາມນິຍົມຊົມຊອບຂອງພະສົງອົງລະເຈົ້າກໍເລີ່ມຫັນຈາກຫນັງສືຜູກໃບລານ ມາສູ່ປຶ້ມອ່ານທຳມະດາ ເພາະສະດວກສະບາຍກວ່າ ລາຄາກໍຖືກວ່າ ຈຶ່ງເປັນເຫດໃຫ້ຫນັງສືໃບລານ ຖືກປະລະລືມຫລັງ ຢ່າງຫນ້າເວດທະນາ. ໂຊກດີຍັງມີນັກປາດອາຈານລາວ ແລະ ຜູ້ມີສັດທາສູງ ໄດ້ຮ່ວມແຮງຮ່ວມໃຈກັນຂຸດຄົ້ນສຳຫລວດຂຶ້ນບັນຊີ ແລະ ປຸກລະດົມຂົນຂວາຍ ໃຫ້ຈົດກ່າຍໄວ້ ເພື່ອໃຫ້ຍືນຍົງຄົງຕົວ ຢູ່ມາຈົນເຖົ້າທຸກວັນນີ້. ບັນດານັກປາດອາຈານລາວ ຜູ້ດີເດັ່ນທີ່ໄດ້ເອົາໃຈໃສ່ ຕໍ່ການປົກ ປັກຮັກສາຫນັງສືໃບລານ ແຕ່ສະໄໝຝະລັ່ງເປັນຕົ້ນມາ ກໍມີ :

ເຈົ້າຈິດຕະລາດ, ເຈົ້າເພັດຊະລາດ, ເຈົ້າສຸວັນນະພູມມາ, ທ່ານ ອາຈານ ມະຫາແກ້ວ, ທ່ານ ພູມີ ວົງວິຈິດ ທ່ານ ອາຈານມະຫາ ສີລາ ວິລະວົງ, ທ່ານ ມະຫາ ພູມີ ຈິດຕະພົງ, ທ່ານ ສົມຈັນ ປີແອງີນ, ທ່ານ ເກນ, ທ່ານອື່ນໆ ແລະ ເຈົ້າອະທິການ ວັດຕ່າງໆ.

ນອກນັ້ນ ຍັງມີນັກປາດຊາວຕ່າງປະເທດ ຈຳນວນຫນຶ່ງທີ່ໄດ້ໃຫ້ຄວາມສົນໃຈ ແລະ ຄົ້ນຄວ້າຂຶ້ນບັນຊີຫນັງສືໃບລານ ລາວ ເຊັ່ນ :

ທ່ານ "ຟີໂນ" ທ່ານ "ລາຟົງ" ແລະ ນັກຄົ້ນຄວ້າຜູ້ອື່ນໆ ຈາກສູນຄົ້ນຄວ້າພາກພື້ນຕາເວັນອອກໄກຂອງຝະລັ່ງ.

→

→

**ພາຍໃຕ້ແປວໄຟສົງຄາມ ຈາກລັດທິລ່າເມືອງຂຶ້ນແບບໃໝ່**

ໃນແປວໄຟສົງຄາມ ທີ່ຣຸກຮານດຳເນີນທິດສະດີ ແລະ ປະຕິບັດການ 3 ກ້ຽງນັ້ນ **ບ້ານເຮືອນ ວັດວາອາຮາມໃນດິນແດນສາມສ່ວນສອງຂອງປະເທດໄດ້ຖືກລະເບີດທຳລາຍ ແລະ ເຜົາຜານ ວັດຖຸບູຮານ ປູຊະນີຍະສະຖານ ໃນນັ້ນໜັງສືຜູກໃບລານ ກໍຕົກຢູ່ໃນຊະຕາກຳອັນດຽວກັນ. ສະໄໝນັ້ນ ພະສົງອົງຄະເຈົ້າ ແລະ ປະຊາຊົນໄດ້ຫອບເອົາຄຳພີດີກາສ່ວນທີ່ຍັງເຫລືອ ເຂົ້າໄປຊຸກເຊື່ອງໄວ້ໃນຖ້ຳ ໃນຮູ ເຊິ່ງພາຍລຸນມາກໍຕົກໂພກ ເນົ່າເປື່ອຍເສຍຫາຍ.** ການສູນເສຍເທື່ອນີ້ ເປັນການສູນເສຍຄັ້ງໃຫຍ່ຫລວງ ເຊິ່ງບໍ່ສາມາດພັນລະນາໄດ້ ປະຊາຊົນ ຄົນສາມັນ ໄດ້ລົ້ມຕາຍລົງຈຳນວນຫລວງຫລາຍ.

- ໜັງສືຜູກໃບລານພາຍຫລັງສ້າງຕັ້ງ ສ.ປ.ປ.ລາວ

ເລີ່ມຕັ້ງແຕ່ ສະໄໝການປະຕິວັດຊາດປະຊາທິປະໄຕ ເປັນຕົ້ນມາພັກ ແລະ ລັດຖະບານເຮົາ ໄດ້ໃຫ້ຄວາມສຳຄັນ ແກ່ການຟື້ນຟູປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ເຊິ່ງເນັ້ນໜັກໃນແນວທາງ ແລະ ນະໂຍບາຍຂອງພັກ ແຕ່ລະໄລຍະຕະຫລອດມາ.

ວັດທະນະທຳ ທີ່ມີລັກສະນະລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ໄດ້ຖືກສ້າງຂຶ້ນ ບົນພື້ນຖານການສືບທອດ, ເສີມຂະຫຍາຍຄຸນຄ່າຂອງວັດທະນະທຳແຫ່ງຊາດ, ສົມທົບກັບການຮັບເອົາຄຸນຄ່າ ວັດທະນະທຳອັນດີງາມ ຂອງມວນມະນຸດຢ່າງມີການເລືອກເຟັ້ນ.

ພາຍຫລັງສະຖາປະນາລະບອບໃໝ່ ພວກເຮົາໄດ້ມີຄວາມພະຍາຍາມອັນຕັ້ງໜ້າເພື່ອຟື້ນຟູ ແລະ ກໍ່ສ້າງວັດທະນະທຳແຫ່ງຊາດ. ປຸກລະດົມຊຸກຍູ້ ແລະ ສົ່ງເສີມຂະບວນວັດທະນະທຳ ສິລະປະ ວັນນະກຳທີ່ມີລັກສະນະຊາດ, ກ້າວໜ້າ ແລະ ລັກສະນະມະຫາຊົນ ໃຫ້ກາຍເປັນພື້ນຖານວັດທະນະທຳຂອງລະບອບໃໝ່ ໄດ້ຮັບການກໍ່ສ້າງຂຶ້ນຫລາຍສົມຄວນຮັບປະກັນ ໃຫ້ການເຜີຍແຜ່ ແລະ ນຳເອົາຜະລິດຕະພັນດ້ານວັດທະນະທຳ ສິລະປະ ວັນນະກຳໄປໃຫ້ປະຊາຊົນຊົມໃຊ້ຢ່າງກວ້າງຂວາງກວ່າເກົ່າ.

ມະຕິຂອງກອງປະຊຸມຄົບຄະນະຄັ້ງທີ 9 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ V ກ່ຽວກັບວຽກງານວັດທະນະທຳໃນໄລຍະໃໝ່ ໄດ້ກ້າວເນັ້ນໜັກໃນຕອນໜຶ່ງວ່າ:

- ປົກປັກຮັກສາ, ຟື້ນຟູບູລະນະພັດທະນາ ແລະ ນຳໃຊ້ຄຸນຄ່າຂອງມໍລະດົກວັດທະນະທຳ ຢ່າງສົມເຫດສົມຜົນ.

ຈັດຕັ້ງການຄົ້ນຄວ້າ ກ່ຽວກັບແຫລ່ງກຳເນີດແຫ່ງສິລະປະ ຂອງຊາດ, ຮ່ອງຮອຍ, ປະຫວັດການ, ເອກະລັກ, ມູນເຊື້ອ ແລະ ມໍລະດົກ

→



✺ ເດັກນ້ອຍ ຊາວໜຸ່ມຍິງຊາຍ ປ່ວນສື່ບກັບສິລະປະພື້ນເມືອງ

# ມິດແທ້ 4 ຈຳພວກ

*( ຄັດຈາກປຶ້ມ ຄາລາວາດປະຕິບັດ, ຮຽບຮຽງໂດຍ ມະຫາສີລາ ວີຣະວົງສ໌ )*

1. ອຸປກາຣໂກ ມິດອຸປະກາຣະ
2. ສມານສຸຂທຸກໂຂ ມິດຮ່ວມສຸກຮ່ວມທຸກ
3. ອັດຖັກຂາຍີ ມິດແນະນຳປະໂຍດ
4. ອນຸກັມປໂກ ມິດຮັກແພງ.

ກ) ມິດອຸປະກາຣະ ມີລັກສະນະ 4 ປະການ ຄື : 1. ປ້ອງກັນສະຫາຍຜູ້ປະຫມາດ 2. ປ້ອງກັນສົມບັດ ຂອງສະຫາຍຜູ້ປະຫມາດ 3. ເມື່ອມີໄພເອົາເປັນທີ່ເພິ່ງ 4. ເມື່ອມີທຸຣະ ຊ່ວຍອອກຊັບໃຫ້ຫຼາຍກວ່າທີ່ເວົ້າໄວ້.

ຂ) ມິດຮ່ວມສຸຂຮ່ວມທຸກ ມີລັກສະນະ 4 ປະການ ຄື : 1. ໄຂຄວາມລັບຂອງຕົນໃຫ້ສະຫາຍຟັງ 2. ອຳຄວາມລັບ ຂອງສະຫາຍໄວ້ບໍ່ໃຫ້ແຜ່ພາຍ 3. ບໍ່ລະໄລສະຫາຍ ໃນຄາວເຖິງຄວາມວິບັດ 4. ໃນຄາວຈຳເປັນ ສາມາດສະລະຊີວິດແທນສະຫາຍໄດ້.

ຄ) ມິດແນະນຳປະໂຍດ ມີລັກສະນະ 4 ປະການຄື : 1. ຫ້າມບໍ່ໃຫ້ສະຫາຍທຳຄວາມຊົ່ວ 2. ຊັກນຳໃຫ້ຕັ້ງຢູ່ໃນ ຄວາມດີສະເຫມີ 3. ຊັກນຳໃຫ້ສະຫາຍໄດ້ຍິນ ໄດ້ຟັງສິ່ງທີ່ເປັນປະໂຫຍດ 4. ບອກທາງ ສະຫວັນໃຫ້.

ງ) ມິດຮັກແພງ ມີລັກສະນະ 4 ປະການ ຄື : 1. ເມື່ອສະຫາຍມີທຸກ ກໍທຸກນຳ 2. ເມື່ອສະຫາຍມີສຸກ ກໍສຸກນຳ 3. ສູ້ຖຽງຄົນຜູ້ເວົ້າຕິຕຽນສະຫາຍ 4. ຮັບຮອງຄົນຜູ້ສັນລະເສີນສະຫາຍ./.

→

ວັດທະນະທຳປະເພດຕ່າງໆ ຂອງຊາດ ກໍຄື ຂອງເຜົ່າຕ່າງໆ.

( ເອກະລັກຂອງຄົນລາວ, ສິລະປະ, ວັນນະຄະດີ, ພາສາ, ສະຖາປັດຕະຍະກຳ ແລະ ອື່ນໆ ຂອງລາວ ແມ່ນແນວໃດ )

ໃນສະເພາະຫນ້ານີ້ ໃຫ້ຮີບຮ້ອນຄົ້ນຄວ້າຫລັກພາສາລາວ ເພື່ອເປັນຫລັກການໃນການໃຊ້ ຢ່າງເອກະພາບ ແລະ ພັດທະນາພາສາລາວໃຫ້ສອດຄ່ອງ ເພື່ອປະຕິບັດແນວທາງນະໂຍບາຍໃຫ້ປາກົດຜົນເປັນຈິງ ແລະ ມີປະສິດທິພາບສູງນັ້ນ. ຂ້າພະເຈົ້າຂໍສັນລະເສີນ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ທີ່ມີສາຍຕາແນມການໄກຢ່າງສະຫລາດສ່ອງໃສ ໄດ້ມີແຜນການ ແລະ ອະນຸມັດໃຫ້ສ້າງຕັ້ງ ໂຄງການປົກປັກ ຮັກສາຫນັງສືຜູກ ໃບລານ ແລະ ໂຄງການຄົ້ນຄວ້າ ແລະ ຈັດພິມຄຳພີໃບລານບູຮານລາວຂຶ້ນ. ບັນດາໂຄງການດັ່ງກ່າວມານີ້ ໄດ້ດຳເນີນວຽກງານຂອງຕົນຢ່າງມີຫມາກ ມີຜົນ ທີ່ຄວນຍ້ອງຍໍຊົມເຊີຍເປັນຢ່າງຍິ່ງ.

ຂ້າພະເຈົ້າເຊື່ອຫມັ້ນວ່າ ບັນດາໂຄງການກ່ຽວກັບຫນັງສືຜູກໃບລານບໍ່ພຽງແຕ່ໄດ້ ແລະ ຈະຂຶ້ນບັນຊີ, ປົກປັກຮັກສາ ຖ່າຍທຳໃນໂຄຣຟິມທີ່ນັ້ນ ແຕ່ຍັງຈະ ຈັດພິມເລື່ອງຕ່າງໆ ອອກເປັນອັກສອນສະໄຫມ ໃຫມ່ໃຫ້ຄົນຮຸ່ນໃຫມ່ ໄດ້ອ່ານ ແລະ ເຂົ້າໃຈຢ່າງກວ້າງຂວາງ. ນອກນີ້ ກໍຄົງຈະມີໂຄງການຄົ້ນຄວ້າ ວິໄຈ ປະລິວັດ ຮຽບຮຽງດັດແປງອອກມາ ເພື່ອປະໂຫຍດທາງວິຊາການ ແລະ ການສຶກສາຂອງລູກລາວຫລານລາວ ຜູ້ບໍ່ມີໂອກາດໄດ້ຮຽນຮູ້ຕົວທຳ ຫລື ສັບສຳນວນບູຮານຄືສະໄຫມກ່ອນ. ດ້ວຍວິທີການດັ່ງກ່າວນີ້ ຈະເຮັດໃຫ້ຄົນສະໄຫມປັດຈຸບັນໄດ້ມີໂອກາດສຳຜັດ ຕິດພັນກັບຄວາມຊົງຈຳ ຈາກອະດີດຕິດພັນກັບຊາດ ແລະ ມໍລະດົກພູມປັນຍາຂອງບັນພະບຸລຸດຂອງຕົນຢ່າງເປັນລະບົບ ແລະ ຕໍ່ເນື່ອງຕະຫລອດໄປ.

## ສະຖິຕິວັດ ແລະ ໜັງສືໃບລານ
## ທີ່ສຳຫລວດແລ້ວສົກປີ 1994-95

ແຂວງຫລວງພະບາງ, ອຸດົມໄຊ ແລະ ໄຊຍະບູລີ

**ແຕ່ວັນທີ 01/10/94- 30/9/95**

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ຈຳນວນ ຜູກ | ຈ/ນ ໃບສຳຫລວດ | ຈ/ນ ເລື່ອງ | ຈ/ນ ມັດ | ໝາຍຖ່າຍໄມໂຄຼຟິມ ຜູກ | ໝາຍຖ່າຍໄມໂຄຼຟິມ ໃບ |
|---|---|---|---|---|---|---|---|---|
| I | **ແຂວງຫຼວງພະບາງ** | | | | | | | |
| | ***ເມືອງຫຼວງພະບາງ*** | | | | | | | |
| 1 | ວັດໃຫມ່ສຸວັນະພູມມາຣາມ | ບ້ານປ່າຂາມ | 1.445 | 446 | 361 | 124 | 299 | 7.358 |
| 2 | ວັດລ່ອງຄູນ | ບ້ານຊຽງແມນ | 1.474 | 394 | 285 | 104 | 31 | 885 |
| 3 | ວັດໂຄມຂວາງ | ບ້ານໂຄມຂວາງ | 1.886 | 405 | 252 | 151 | 83 | 1.696 |
| 4 | ວັດອຸດອນເທພໄພສານ | ບ້ານດອນເຕົ່າ | 1.249 | 321 | 191 | 104 | 75 | 1.990 |
| 5 | ວັດໝື່ນນາຊົມພູອາຣາມ | ບ້ານໝື່ນນາ | 1.315 | 315 | 249 | 105 | 164 | 4.031 |
| 6 | ວັດອາໄພ | ບ້ານອາໄພ | 685 | 166 | 116 | 68 | 87 | 2.196 |
| 7 | ວັດມະໂນລົມ | ບ້ານມະໂນ | 836 | 226 | 194 | 65 | 66 | 1.588 |
| 8 | ວັດອາຣາມ | ບ້ານອາຣາມ | 111 | 37 | 35 | 8 | | |
| 9 | ວັດເຕົ່າໄຫ | ບ້ານເມືອງງາ | 342 | 232 | 138 | 19 | 13 | 310 |
| 10 | ວັດປ່າໜ້າຍາທີບ | ບ້ານວຽງໃໝ່ | 123 | 46 | 43 | 10 | | |
| 11 | ວັດສະແກ້ນ | ບ້ານວຽງໃໝ່ | 103 | 36 | 36 | 6 | | |
| 12 | ວັດພົນຫລວງ | ບ້ານພົນຫລວງ | 1.604 | 621 | 364 | 99 | 3 | 82 |
| 13 | ວັດໂພນສັງ | ບ້ານພົນຫລວງ | 181 | 98 | 98 | 9 | 1 | 144 |
| 14 | ວັດທາດຫລວງ | ບ້ານທາດຫຼວງ | 1.660 | 738 | 377 | 119 | 126 | 3.182 |
| 15 | ວັດມະຫາທາດ | ບ້ານວັດທາດ | 374 | 193 | 105 | 35 | 13 | 424 |
| 16 | ວັດໂພນໄຊຊະນະ | ບ້ານປ່າຂາມ | 487 | 236 | 137 | 36 | | |
| 16 | ລວມ | | 13.875 | 4.510 | 2.981 | 1.062 | 961 | 23.886 |
| II | **ແຂວງອຸດົມໄຊ** | | | | | | | |
| | ***ເມືອງໄຊ*** | | | | | | | |
| 1 | ວັດພູແລ | ບ້ານກິ່ວ | 316 | 85 | 54 | 21 | 46 | |
| 2 | ວັດໂພໄຊ | ບ້ານນາສ້າວ | 232 | 85 | 75 | 20 | | |
| 3 | ວັດໂພສະຫວ່າງ | ບ້ານນາແລ | 46 | 20 | 19 | 4 | | |
| 4 | ວັດບ້ານທ້ຽວ | ບ້ານທ້ຽວ | 172 | 61 | 57 | 16 | | |

| | | | | | | | | |
|---|---|---|---|---|---|---|---|---|
| 5 | ວັດເມືອງກໍ່ | ບ້ານນາຫມີ | 51 | 39 | 36 | 7 | | |
| 6 | ວັດສີສະອາດ | ບ້ານບໍ່ | 111 | 39 | 37 | 16 | | |
| 7 | ວັດນາຈາງ | ບ້ານນາຈາງ | 100 | 48 | 43 | 13 | | |
| 8 | ວັດສີສະອາດໂພນທອງ | ບ້ານກໍນ້ອຍ | 43 | 20 | 20 | 6 | | |
| 9 | ວັດລ້ອງຍາ | ບ້ານລ້ອງຍາ | 54 | 28 | 27 | 10 | | |
| 10 | ວັດສັນຕິພາບສີໄຊຍະລາມ | ບ້ານເຈງ | 41 | 29 | 26 | 13 | | |
| 11 | ວັດສາວຫລວງ | ບ້ານກັດ | 56 | 28 | 26 | 9 | | |
| | *ເມືອງປາກແບ່ງ* | | | | | | | |
| 12 | ວັດສີຈອມແຈ້ງ | ບ້ານຈອມແຈ້ງ | 290 | 114 | 114 | 20 | | |
| 13 | ວັດຄົກລໍ້ມິ່ງມຸງຄຸນ | ບ້ານຄົກລໍ້ | 212 | 89 | 89 | 17 | 43 | 950 |
| 14 | ວັດຄົກກະຈະເລີນຜົນ | ບ້ານຄົກກະ | 415 | 96 | 91 | 27 | | |
| 15 | ວັດສີບຸນເຮືອງສຸຂະຣາມ | ບ້ານເວີຍເຫນືອ | 646 | 125 | 122 | 36 | | |
| 16 | ວັດໂພສີຕາກ | ບ້ານຄົກເວີຍໃຕ້ | 1.033 | 177 | 119 | 52 | | |
| | *ເມືອງງາ* | | | | | | | |
| 17 | ວັດລາດທານສຸຂາຣາມ | ບ້ານລາດທານ | 465 | 93 | 90 | 18 | | |
| 18 | ວັດທານມີໄຊຍາຣາມ | ບ້ານລາດທານ | 150 | 62 | 61 | 9 | | |
| 19 | ວັດຄົກພຸສຸວັນນາຣາມ | ບ້ານຄົກພຸ | 1.007 | 186 | 72 | 43 | | |
| 20 | ວັດຍອຍໄຮ | ບ້ານຍອຍໄຮ | 173 | 63 | 59 | 9 | | |
| 20 | ລວມ | | 5.613 | 1.487 | 1.237 | 366 | 89 | 950 |
| III | **ແຂວງໄຊຍະບູລີ** | | | | | | | |
| | *ເມືອງບໍ່ແຕນ* | | | | | | | |
| 1 | ວັດໂພແທ່ນໂບຣານາຣາມ | ບ້ານບໍ່ແຕນ | 1.969 | 339 | 137 | 182 | 338 | 8.443 |
| 2 | ວັດໂນນສະຫວ່າງໂພທິໄຊຍະຣາມ | ບ້ານເມືອງກໍ | 1.037 | 128 | 104 | 67 | 155 | 4.321 |
| 3 | ວັດໂພທິສົມພານ | ບ້ານນາກອກ | 401 | 72 | 45 | 24 | 8 | 150 |
| 4 | ວັດສີບຸນເຮືອງ | ບ້ານຕາລິ້ງ | 578 | 77 | 74 | 23 | 43 | 609 |
| 5 | ວັດໂພໄຊ | ບ້ານກຸ່ມ | 352 | 65 | 50 | 20 | | |
| 6 | ວັດໂພສີ | ບ້ານເຫມືອງແພ່ | 1.868 | 307 | 184 | 103 | 140 | 3.685 |
| 7 | ວັດໂພໄຊສະຫວ່າງ | ບ້ານນາກາວ | 1.175 | 156 | 116 | 45 | 48 | 867 |
| 8 | ວັດໂພລຳ | ບ້ານບໍ່ທາງນາ | 800 | 105 | 65 | 25 | 27 | 209 |
| 9 | ວັດໂພໄຊມະຫາມຸງຄຸນ | ບ້ານບໍ່ສານ | 281 | 68 | 65 | 10 | | |
| | *ເມືອງແກ່ນທ້າວ* | | | | | | | |
| 10 | ວັດສີພູມປະດິດສະຖາລາມ | ບ້ານສີພູມ | 486 | 108 | 94 | 32 | 85 | 1.493 |
| 11 | ວັດຈອມແຈ້ງ | ບ້ານຈອມແຈ້ງ | 279 | 61 | 59 | 28 | 21 | 1.049 |
| 12 | ວັດໂພນແທ່ນ | ບ້ານຫນອງ | 838 | 129 | 94 | 34 | 8 | 392 |
| 13 | ວັດໂພໄຊໂພທິບາລາມ | ບ້ານປາກແຄມ | 379 | 72 | 64 | 20 | | |

| | | | | | | | | |
|---|---|---|---|---|---|---|---|---|
| | *ເມືອງປາກລາຍ* | | | | | | | |
| 14 | ວັດສີມຸງຄຸນ | ບ້ານໃຫຍ່ | 596 | 136 | 117 | 41 | | |
| 15 | ວັດຄະຣຸບຸນມີ | ບ້ານໃໝ່ | 70 | 32 | 32 | 4 | | |
| 16 | ວັດນາໜອກ | ບ້ານນາໜອກ | 1 | 1 | 1 | 1 | | |
| 17 | ວັດບ້ານດ່ານ | ບ້ານດ່ານ | 41 | 16 | 15 | 6 | | |
| 18 | ວັດສີບຸນເຮືອງ | ບ້ານທາດ | 366 | 95 | 85 | 25 | 5 | 146 |
| 19 | ວັດສີສະອາດ | ບ້ານແສ່ນ | 37 | 20 | 20 | 2 | | |
| 20 | ວັດຈອມແຈ້ງ | ບ້ານແດດ | 209 | 61 | 57 | 14 | | |
| 21 | ວັດໂພໄຊ | ບ້ານນາມ່ວງ | 98 | 37 | 33 | 12 | | |
| 22 | ວັດໂພຄຳ | ບ້ານບົວບານ | 819 | 158 | 105 | 44 | | |
| 23 | ວັດໂພໄຊທະນາຣາມ | ບ້ານເມືອງວາ | 171 | 53 | 53 | 10 | | |
| 24 | ວັດໂພພະຣາມ | ບ້ານມ່ວງເໜືອ | 400 | 88 | 81 | 19 | | |
| 25 | ວັດສີມຸງຄຸນ | ບ້ານມ່ວງໃຕ້ | 85 | 23 | 22 | 3 | | |
| 26 | ວັດສີສະອາດໂພນງາມ | ບ້ານນ້ຳຍາງ | 450 | 79 | 70 | 18 | | |
| 27 | ວັດໂພນແກ້ວ | ບ້ານໂພນໄຊ | 102 | 48 | 42 | 3 | | |
| 28 | ວັດສຸວັນນະພູມາຣາມ | ບ້ານສຸວັນນະພູມ | 627 | 250 | 144 | 25 | | |
| 29 | ວັດສີສະຫວ່າງ | ບ້ານຫາດດ້າຍ | 89 | 28 | 28 | 3 | | |
| 30 | ວັດໂພສີເຂມະໂປ | ບ້ານທ່າປີ | 122 | 50 | 49 | 5 | | |
| 31 | ວັດໂພໄຊ | ບ້ານກາງ | 300 | 65 | 59 | 10 | | |
| | *ເມືອງພຽງ* | | | | | | | |
| 32 | ວັດຈັນທະລັງສີ | ບ.ໂພນສະອາດ | 262 | 64 | 63 | 10 | | |
| 32 | ລວມ | | 15.288 | 2.991 | 2.227 | 868 | 878 | 21.364 |
| 68 | ລວມທັງໝົດ | | 34.776 | 8.988 | 6.445 | 2.296 | 1.928 | 46.200 |

*ພິທີຕັ້ງເສົາແຮກ... ຕໍ່ຈາກໜ້າ 9*

ເປັນເສົາຂວັນພ້ອມກັນ. ເພີ່ນເອີ້ນໄມ້ຄ້ຳພວກນັ້ນວ່າໄມ້ຄາງແມວ.

*ຈາກການກຽມເຄື່ອງສັກກາລະບູຊາແລ້ວ ກ່ອນຈະເລືອກຫາຂຸມ ຫລືບ່ອນຕັ້ງເສົາຂວັນ ເພີ່ນກໍເລາະລຽບເບິ່ງວ່າຈະເປັນເສົາແຈ ຫລື ເສົາກາງ ຫລື ທາງທິດໃດ ແລ້ວແຕ່ເໝາະສົມ ແລ້ວກໍຈະກ່າວຄຳສະໂຫລກອີກ ເທື່ອໜຶ່ງ ເພື່ອຂຸດຫາບ່ອນທີ່ເປັນສີລີມຸງຄຸນ ດ້ວຍຄຳວ່າ:

- <u>ໄຊສືບ ຫລື ສອກທີ 1</u>:
- ເອົາບ່ອນຈຸ້ມກຸ້ມໜູສີ ນີ້ບໍ?

ຜູ້ຕອບວ່າ ບໍ່
- ເອົາບ່ອນ ຈີປີ່ ຫາງນາກ ນີ້ບໍ?

ຜູ້ຕອບວ່າ ບໍ່
- ເອົາບ່ອນຊາກລາກ ຫາງທົງ ນີ້ບໍ?

ຜູ້ຕອບວ່າ ບໍ່
- ເອົາບ່ອນຖົງເງິນຖົງຄຳທ້ອຍໄວ້ນີ້ບໍ?

ຜູ້ຕອບວ່າ ເອີ!

ພວກຍາດຕິພີ່ນ້ອງ ກໍພ້ອມກັນຮັບວ່າ ເອີ! ເອົາບ່ອນນີ້ລະ - ແລ້ວກໍພ້ອມກັນຍົກເສົາຂຶ້ນ ຕັ້ງເປັນເສົາແຮກ-ເສົາຂວັນ ໃນບ່ອນນັ້ນ.

**ອັນນີ້ ຂ້າພະເຈົ້າເຫັນວ່າເປັນພິທີຂອງຄົນບູຮານ ແຕ່ການທີ່ຄົນເຖົ້າຄົນແກ່ ພໍ່ແມ່ ປູ່ຕາ ເພີ່ນເຮັດມາກໍຫາກມີຈິດວິທະຍາຂອງເພີ່ນ ເພື່ອສະແດງເຖິງຄວາມພ້ອມພຽງ ຄວາມເຫັນດີເຫັນຊອບຈາກຫລາຍຄົນ ແລະ ຜູ້ທີ່ຈະເປັນເຈົ້າບ້ານເຈົ້າເຮືອນກໍຄົງ ບໍ່ມີຄຳກິນແໜງແຄງໃຈ ໃນເມື່ອຕົນເອງໄດ້ພະຍາຍາມສ້າງບ້ານແປງເຮືອນ ແລະສ້າງຢູ່ທຳກິນເພື່ອໃຫ້ເກີດຄວາມອົບອຸ່ນຊຸ່ມເຢັນ ເຖິງວ່າຈະມີອຸປະສັກອື່ນໆ ເລັກນ້ອຍ ກໍບໍ່ໄດ້ກິນແໜງແຄງໃຈນຳບ່ອນຢູ່ບ່ອນສ້າງ ຈຶ່ງຂໍຝາກໄວ້ໃຫ້ລູກຫລານ ໄດ້ພິຈາລະນາ.**

# ນ້ຳໃຈ ຂອງສາທຸ ອ້ວນ

*ຮຽບຮຽງໂດຍ : ມະຫາບຸນຍົກ ແສນສູນທອນ*
*ຈາກ ວັດໃຫມ່ສຸວັນນະພູມມາຣາມ ( ເມືອງຫລວງພະບາງ )*

ນັບ ແຕ່ການກໍ່ສ້າງ        ນ້ຳບໍ່ສາລາ
ທັງກຸຕິຖວາຍສົງ        ຢູ່ຮັກສາສິນຊ້ອຍ
ບຸນນັ້ນ ພອຍພາໃຫ້        ຜົນທານທອດສົ່ງ
ເກີດແກ່ຜູ້ກໍ່ສ້າງ        ປະສົງໄດ້ ຊູ່ຍາມ
ອັນທີ່ເທທານໃຫ້        ຝູງຫມູ່ໂຜຊະນາ
ທັງເຫລົ່າອາພອນຜົນ        ແຜ່ງປາທັງຄ້າຍ
ແມ່ນຈັກຊົມແຊວດ້ວຍ        ຫລາຍຄົນມາຊ່ວຍກັນນັ້ນ
ພໍ່ແຕ່ລາວຫນຶ່ງໄດ້        ກຸສົນຊ້ອຍຊື່ນມະໂນ
ບໍ່ໄດ້ມີຂອງຕັ້ງ        ເປັນຄູ່ຄຽງຕາ
ເປັນສິ່ງພາໃຈບານ        ທ່ຽວເຫັນຮອດສາຫມັ້ນ
ຄອນທີ່ຕອງຕາຖ້ອນ        ການທານຊອບສ່ວນ   ແຫ່ນາ
ຄອນຈັກເມືອຢູ່ຢັ້ງມ        ຕອນຜູ້ເຜົ່າສວອນ
ໃຫ້ໄດ້ທຳການສ້າງ        ກຸສົນເລີດໂຮງສົມ   ແທ້ແລ້ວ
ຕາມຫມື່ນ ສຸພັນໄຂ        ຂ່າວເຊີນໂຊມນື້ວ
ຈັກໄດ້ເປັນບຸນຕັ້ງ        ຕິດຕາເທົ້າຊົ່ວ ຊີວາແລ້ວ
ເປັນດັ່ງດວງແວ່ນກັ້ງ        ກາງຫນ້າລຳແຍງ
ແລ້ວຈິ່ງເມືອເຖິງຫ້ອງ        ຫ້ອງຖິ່ນຊຽງເງິນ
ວາງຍັງເຮືອລຳຫລວງ        ມອບເຄນຄືນໄວ້
ອັນທີ່ເປັນຂອງເຈົ້າ        ອະທິການອົງອາດ
ໃນທີ່ອາວາດກວ້າງ        ຊຽງເງິນຜຸ້ນພາກໄກ
ແລ້ວກໍກັບຄືນເຂົ້າ        ທາແຫ່ງຫລວງພະບາງ
ຍູທ່າງສຳລານສຸກ        ທ່ອນເຄືອງຄ່ຳຮ້ອນ
ພໍເມື່ອພົ້ນສາຂານ        ເຖິງແຮມເດືອນສີ່ ປີນັ້ນ
ອອນໄດ້ເຂົ້າຂີ່ຫ້ອງ        ເຮືອລ້ຳເລື່ອນກະແສ
ຫມາຍມຸ່ງເມືອເຖິງບ້ານ        ສົບບາກແລນຄານ
ເພື່ອຊັກນຳທາຍົກ        ທອດເທທານສ້າງ
ພັດທະສີມາຕັ້ງ        ຂວັນຕາແມນມົ່ງ



→

ເປັນສິ່ງຊູເຊີດໄວ້ ເມືອງບ້ານຮຸ່ງຂວາງ
ແຕ່ນັ້ນ ເຮືອກໍເລື່ອນໆ ຍ້າຍ ຍັບຍ່ານກະແສສິນ
ສົມະນາຍືນ ຢຽບຢັນຫຼວເທົ້າ
ຜູ້ຫນຶ່ງຄອຍຄືງທ້າຍ ຫລາຍຄົນເທົ້າທໍ່
ເຮືອຈິ່ງຍ້າຍຍ່ານນ້ຳ ເຖິງຖ້ອນທີ່ປະສົງ ທ່ານເອີຍ
ພໍເມື່ອເຮືອເຖິງແກ້ງ ເຊັ່ງຊື່ແຊນຍອງ
ຍືນແຕ່ຫົມໆ ສຽງ ສິ່ງແປວເປັນທ້າງ
ຝາກຫນຶ່ງຝັ່ງ ໆ ກ້ອງ ກອງທີນນ້ຳທົ່ງ
ດູດັ່ງ ອ້າປາກເປື້ອງ ເປັນຂໍ້ກ່າວຖາມ
ອັນວ່າ ພະພີ່ນ້ອງ ຈັກເຖິນເຫດທາງໃດ ນີ້ເດ
ຈິ່ງໄດ້ຫຼອນາວາ ຜ່າກະແສສິນທ້າງ
ຍັງມີຫົມໆ ທ້າງ ແຊນສູງຂານຕອບ ກັນແລ້ວ
ວ່າເຜີ່ນເມືອປ່າວສ້າງ ໂຮງລ້ຳພັດທະສີມ

ອັນທີ່ມີໃນຕ້ອງ ສິບບາກແຄນຄານ ທີ່ພຸ້ນ
ເປັນທີ່ ຊູຣາສີ ຮຸ່ງເຮືອງເມືອງບ້ານ
ໃຜຜູ້ຍິນຕີດ້ອຍ ມະໂນໃນຊ້ອຍຊື່ນ ດອນນັ້ນ
ບຸນຈັກຊູຊ່ອຍຄ້ຳ ຜ່າຍຫນ້າຮຸ່ງຂວາງ ທ່ານເອີຍ
ທຸກທີ່ ແຊນຊົນຕ້ອງ ໂຕນຕາດຕີຟອງ
ດູດັ່ງຕົບມືຂານ ກ່າວສຽງປະສົງຮ້ອງ
ເປັນສັບສາທຸການໃຫ້ ພົນພອນພ້ອມພ່ຳກັນແລ້ວ
ວ່າໃຫ້ສົນນຶກໄດ້ ໂດຍດ້ານດັ່ງປອງ ພະເອີຍ

( ອ່ານຕໍ່ສະບັບໜ້າ )

ເຈົ້າຂອງ
ໂຄງການປົກປັກຮັກສາຫນັງສືໃບລານລາວ
ສຳນັກງານ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຕູ້ ປ.ນ. 6244 ໂທລະສັບ 213029

ຄະນະຈັດທຳ
ຫົວຫນ້າບັນນາທິການ: ດາຣາ ກັລຍາ
ຜູ້ຊ່ອຍບັນນາທິການ : ຈັນສະມຸດ ທີລະກຸນ
ຈັດຫນ້າຄອມພິວເຕີ : ວຽງຄຳ ບັນທະວົງດວງສີ
ມາລີ ທອງທຸມມາ

ຖ່າຍພາບ
- ດາຣາວັນ ລາດຊະວົງ
- ຈັນສະຫມອນ ສົມພານວິຈິດ
- ໄພວັນ ທຳມະວົງ

* ຈັດພິມ ສຳລັບແຈກຢາຍ